ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 118 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້

## ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 124/ສພຊ, ລົງວັນທີ 28 ມິຖຸນາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 18/ຄປຈ, ລົງວັນທີ 29 ກໍລະກົດ 2024.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 124 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 / 06 / 24

## ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມ ຄັ້ງວັນທີ 21 ມິຖຸນາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 28 ມິຖຸນາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ. ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 56 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2024

# ກົດໝາຍ
# ວ່າດ້ວຍສະພາແຫ່ງຊາດ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາແຫ່ງຊາດ ເພື່ອຮັບປະກັນການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນ, ແນໃສ່ ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການອຳນາດລັດ, ປະກອບສ່ວນ ເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງ ປະຊາຊົນ ຢ່າງແທ້ຈິງ.

**ມາດຕາ 2 (ປັບປຸງ) ສະພາແຫ່ງຊາດ**

ສະພາແຫ່ງຊາດ ແມ່ນ ອົງການຕົວແທນແຫ່ງ ສິດ ແລະ ຜົນປະໂຫຍດ ຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນຍັດ ມີພາລະບົດບາດ ພິຈາລະນາ, ຮັບຮອງເອົາ ລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອົງການຕົວແທນ** ໝາຍເຖິງ ອົງການທີ່ໄດ້ຮັບມອບໝາຍ ສິດອຳນາດຈາກປະຊາຊົນ;
2. **ນິຕິບັນຍັດ** ໝາຍເຖິງ ການອອກກົດໝາຍ;
3. **ການຕິດຕາມກວດກາ** ໝາຍເຖິງ ການເຄື່ອນໄຫວ ເກັບກຳ ສະພາບ, ຂໍ້ມູນ ແລະ ຕີລາຄາ ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງບັນດາ ອົງການລັດ ແລະ ບຸກຄະລາກອນ ໃຫ້ຖືກຕ້ອງ, ສອດຄ່ອງກັບ ລັດຖະທຳມະນູນ ແລະ ກົດໝາຍ;

4. **ການໃຫ້ສັດຕະຍາບັນ** ໝາຍເຖິງ ການຮັບຮອງເອົາສົນທິສັນຍາ ທີ່ ສປປ ລາວ ໄດ້ລົງນາມເປັນພາຄີ ໂດຍ ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ;

5. **ບັນຫາສຳຄັນພື້ນຖານຂອງປະເທດຊາດ** ໝາຍເຖິງ ບັນຫາທາງດ້ານ ການເມືອງ ແລະ ການປົກຄອງ, ດ້ານເສດຖະກິດ-ສັງຄົມ, ດ້ານການຈັດຕັ້ງ ແລະ ບຸກຄະລາກອນ;

6. **ພົນລະເມືອງລາວ** ໝາຍເຖິງ ຜູ້ຖືສັນຊາດລາວ ຊຶ່ງມີສາຍກ່ຽວພັນສະໜິດແໜ້ນທາງດ້ານ ການເມືອງ ແລະ ກົດໝາຍ ລະຫວ່າງ ບຸກຄົນ ກັບ ລັດ ສປປ ລາວ;

7. **ການປະເມີນຄວາມໄວ້ວາງໃຈ** ໝາຍເຖິງ ການຕີລາຄາຂອງສະມາຊິກສະພາແຫ່ງຊາດ ດ້ວຍການ ໃຫ້ຄະແນນເປັນຕົວເລກ ເພື່ອຈັດປະເພດຕໍ່ຜົນສຳເລັດການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ;

8. **ການລົງມະຕິບໍ່ໄວ້ວາງໃຈ** ໝາຍເຖິງ ການລົງມະຕິ ບໍ່ສະໜັບສະໜູນ ຫຼື ບໍ່ເຊື່ອໝັ້ນ ຂອງສະມາຊິກສະພາແຫ່ງຊາດ ຕໍ່ການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ ໂດຍກອງປະຊຸມສະພາແຫ່ງຊາດ;

9. **ຍຸຕິທຳ** ໝາຍເຖິງ ຄວາມຖືກຕ້ອງເປັນທຳ ຕາມກົດໝາຍ;

10. **ນິຕິທຳ** ໝາຍເຖິງ ການເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງຖືກຕ້ອງ ແລະ ເຂັ້ມງວດ;

11. **ສາບານຕົນ** ໝາຍເຖິງ ປະຕິຍານຕົນຕໍ່ໜ້າສະພາແຫ່ງຊາດ ວ່າຈະປະຕິບັດໜ້າທີ່, ຕຳແໜ່ງດ້ວຍຄວາມສັດຊື່ບໍລິສຸດ ເພື່ອຮັບໃຊ້ ຊາດ ແລະ ປະຊາຊົນ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ**

ລັດ ໃຫ້ຄວາມສຳຄັນຕໍ່ການເຄື່ອນໄຫວວຽກງານ ຂອງສະພາແຫ່ງຊາດ ດ້ວຍການເຊີດຊູບົດບາດຂອງສະພາແຫ່ງຊາດ ໃຫ້ສູງຂຶ້ນ.

ລັດ ຊຸກຍູ້ ບັນດາອົງການລັດ ເພີ່ມທະວີການ ພົວພັນ, ຮ່ວມມື ໃນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ເພື່ອໃຫ້ສາມາດປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ປຸກລະດົມໃຫ້ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານສະພາແຫ່ງຊາດ.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ດ້ວຍການ ປະກອບບຸກຄະລາກອນທີ່ມີ ຄວາມຮູ້, ຄວາມສາມາດ, ສະໜອງ ງົບປະມານ, ພາຫະນະ, ວັດຖຸປະກອນ, ໂຄງລ່າງພື້ນຖານ ແລະ ເງື່ອນໄຂອື່ນ ທີ່ຈຳເປັນ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ເຄື່ອນໄຫວວຽກງານ ບົນພື້ນຖານຫຼັກການ ດັ່ງນີ້:

1. ລວມສູນປະຊາທິປະໄຕ, ປະຕິບັດໜ້າທີ່ວຽກງານຕາມລະບອບປະຊຸມ ແລະ ຕົກລົງບັນຫາຕາມສຽງສ່ວນຫຼາຍ;

2. ນິຕິທຳ;

3. ຍຸຕິທຳ;

4. ຕິດແທດຕົວຈິງກັບ ປະຊາຊົນ ແລະ ຮາກຖານ;

5. ປະສານສົມທົບຢ່າງກົມກຽວກັບ ອົງການລັດ ແລະ ອົງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 6 (ປັບປຸງ) ອາຍຸການຂອງສະພາແຫ່ງຊາດ**

ສະພາແຫ່ງຊາດແຕ່ລະຊຸດ ມີອາຍຸການ ຫ້າປີ ຊຶ່ງເລີ່ມແຕ່ ກອງປະຊຸມຄັ້ງປະຖົມມະລືກ ຂອງສະພາແຫ່ງຊາດຊຸດນັ້ນ ໄປເຖິງກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ ຊຸດໃໝ່.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຕ້ອງໃຫ້ສຳເລັດຢ່າງຊ້າ ຫົກສິບວັນ ກ່ອນສະພາແຫ່ງຊາດຊຸດເກົ່າຈະໝົດອາຍຸການ.

ໃນກໍລະນີ ມີຄວາມຫຍຸ້ງຍາກ ໃຫ້ແກ່ການເລືອກຕັ້ງ ຍ້ອນສະພາບການໃດໜຶ່ງນັ້ນ ກໍສາມາດຕໍ່ອາຍຸການຂອງສະພາແຫ່ງຊາດໄດ້ ແຕ່ຕ້ອງດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດໃໝ່ ຢ່າງຊ້າບໍ່ໃຫ້ເກີນ ຫົກເດືອນ ພາຍຫຼັງສະພາບການດັ່ງກ່າວ ກັບຄືນສູ່ຄວາມເປັນປົກກະຕິ.

ໃນກໍລະນີ ມີຄວາມຈຳເປັນ ສະພາແຫ່ງຊາດ ຈະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ກ່ອນໝົດອາຍຸການຂອງຕົນກໍໄດ້ ແຕ່ຕ້ອງໄດ້ຮັບຄວາມເຫັນດີ ຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ປະທານສະພາແຫ່ງຊາດ, ປະທານກຳມາທິການ ແລະ ຫົວໜ້າຫ້ອງວ່າການ ສະພາແຫ່ງຊາດ ດຳລົງຕຳແໜ່ງຢູ່ບ່ອນເກົ່າບໍ່ໃຫ້ເກີນ ສອງສະໄໝ ຕິດຕໍ່ກັນ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ສະພາແຫ່ງຊາດ ພົວພັນ ຮ່ວມມື ກັບລັດຖະສະພາ, ອົງການຈັດຕັ້ງອື່ນ ຂອງ ຕ່າງປະເທດ, ພາກພື້ນ ແລະ ສາກົນ ບົນພື້ນຖານ ແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ດ້ວຍການເຂົ້າຮ່ວມກອງປະຊຸມ, ການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ສຳມະນາຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ ເພື່ອພັດທະນາວຽກງານ ຂອງສະພາແຫ່ງຊາດ ໃຫ້ມີຄຸນນະພາບ, ປະສິດທິພາບ ແລະ ປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II

## ສະພາແຫ່ງຊາດ

### ໝວດທີ 1

### ທີ່ຕັ້ງ ແລະ ພາລະບົດບາດ ຂອງສະພາແຫ່ງຊາດ

**ມາດຕາ 8 ທີ່ຕັ້ງຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ແມ່ນ ອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການສູງສຸດແຫ່ງອຳນາດລັດ ແລະ ເປັນອົງການນິຕິບັນຍັດ.

**ມາດຕາ 9 (ປັບປຸງ) ພາລະບົດບາດຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີພາລະບົດບາດ ພິຈາລະນາ, ຮັບຮອງເອົາ ລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດ.

## ໝວດທີ 2
## ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ

**ມາດຕາ 10 ສິດ ແລະ ໜ້າທີ່ລວມຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ລວມ ດັ່ງນີ້:

1. ສິດ ແລະ ໜ້າທີ່ ດ້ານນິຕິບັນຍັດ;
2. ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສໍາຄັນພື້ນຖານຂອງປະເທດຊາດ;
3. ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ.

**ມາດຕາ 11 (ປັບປຸງ) ສິດ ແລະ ໜ້າທີ່ ດ້ານນິຕິບັນຍັດ**

ສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດ້ານນິຕິບັນຍັດ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ລັດຖະທໍາມະນູນ ແລະ ກົດໝາຍ;
2. ພິຈາລະນາ, ຮັບຮອງເອົາ ແຜນການສ້າງ ແລະ ປັບປຸງກົດໝາຍ;
3. ພິຈາລະນາ, ຮັບຮອງເອົາ ການໃຫ້ສັດຕະຍາບັນ, ການເຂົ້າຮ່ວມເປັນພາຄີ ຫຼື ການຍົກເລີກ ສົນທິສັນຍາ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ ຊຶ່ງພົວພັນກັບບັນຫາສໍາຄັນພື້ນຖານ ຂອງປະເທດຊາດ ຕາມການສະເໜີຂອງຄະນະປະຈໍາສະພາແຫ່ງຊາດ;
4. ຍົກເລີກນິຕິກໍາຂອງພາກສ່ວນຕ່າງໆ ທີ່ຂັດກັບ ລັດຖະທໍາມະນູນ ແລະ ກົດໝາຍ, ຍົກເວັ້ນຄໍາຕົກລົງ ກ່ຽວກັບການດໍາເນີນຄະດີຂອງ ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ.

**ມາດຕາ 12 (ປັບປຸງ) ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສໍາຄັນພື້ນຖານຂອງປະເທດຊາດ**

ສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສໍາຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

1. ດ້ານການເມືອງ ແລະ ການປົກຄອງ

1.1. ພິຈາລະນາ, ຮັບຮອງເອົາ ບັນຫາຄວາມໝັ້ນຄົງ, ຄວາມປອດໄພ, ບັນຫາສົງຄາມ ຫຼື ສັນຕິພາບ ແລະ ການໃຫ້ນິລະໂທດກໍາ ຕາມການສະເໜີຂອງຄະນະປະຈໍາສະພາແຫ່ງຊາດ;

1.2. ພິຈາລະນາ, ຮັບຮອງເອົາ ເຂດແດນຂອງ ນະຄອນຫຼວງ, ແຂວງ, ແຜນຜັງລວມຕົວເມືອງ ຂອງນະຄອນຫຼວງ ຕາມການສະເໜີຂອງນາຍົກລັດຖະມົນຕີ;

1.3. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ;

1.4. ພິຈາລະນາ, ຮັບຮອງເອົາ ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວ ວຽກງານຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ.

1.5. ພິຈາລະນາຍຸບສະພາປະຊາຊົນຂັ້ນແຂວງ ໃນກໍລະນີ ສະພາປະຊາຊົນນັ້ນ ຫາກໄດ້ສ້າງຄວາມ ເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງ ປະເທດຊາດ ແລະ ປະຊາຊົນ ຕາມການສະເໜີຂອງຄະນະປະຈໍາ ສະພາແຫ່ງຊາດ;

1.6. ປະເມີນຄວາມໄວ້ວາງໃຈ ໃນການປະຕິບັດໜ້າທີ່ວຽກງານ ຕໍ່ບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ;

1.7. ລົງມະຕິບໍ່ໄວ້ວາງໃຈ ຕໍ່ບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີ ແຕ່ງຕັ້ງ ຕາມການສະເໜີຂອງຄະນະປະຈໍາສະພາແຫ່ງຊາດ ຫຼື ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈໍານວນສະມາຊິກສະພາ ແຫ່ງຊາດ ທັງໝົດເປັນຜູ້ສະເໜີ.

2. ດ້ານເສດຖະກິດ-ສັງຄົມ

2.1. ພິຈາລະນາ, ຮັບຮອງເອົາ ວິໄສທັດ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນການລົງທຶນຂອງລັດ, ການຈັດສັນງົບປະມານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ, ການດັດແກ້ແຜນງົບປະມານແຫ່ງລັດ ແລະ ການດັດແກ້ແຜນການລົງທຶນຂອງລັດ;

2.2. ພິຈາລະນາ, ຮັບຮອງເອົາ ນະໂຍບາຍພື້ນຖານດ້ານ ເສດຖະກິດ-ສັງຄົມ, ການເງິນ, ເງິນຕາ, ອັດຕາສ່ວນການຂາດດຸນງົບປະມານ, ແຫຼ່ງດຸນດ່ຽງງົບປະມານ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ;

2.3. ພິຈາລະນາ, ຮັບຮອງເອົາ ການກຳນົດ, ການປ່ຽນແປງ, ການລົບລ້າງ ຫຼື ການຍົກເວັ້ນ ອັດຕາພາສີ ແລະ ອາກອນ;

2.4. ພິຈາລະນາ, ຮັບຮອງເອົາ, ໂຈະ ຫຼື ຍົກເລີກ ໂຄງການລະດັບຊາດ ທີ່ມີລັກສະນະຍຸດທະສາດ, ໂຄງການຂະໜາດໃຫຍ່ ແລະ ໂຄງການທີ່ມີຜົນກະທົບຕໍ່ ສິ່ງແວດລ້ອມ, ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

2.5. ພິຈາລະນາ, ຮັບຮອງເອົາ ຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ.

3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ

3.1. ດ້ານການຈັດຕັ້ງ

3.1.1. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງສະພາແຫ່ງຊາດ, ການສ້າງຕັ້ງ,ໂຮມເຂົ້າ ຫຼື ຍຸບເລີກ ກົງຈັກຂອງສະພາແຫ່ງຊາດ;

3.1.2. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກການຈັດຕັ້ງຂອງລັດຖະບານ;

3.1.3. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງ, ແຂວງ ຕາມການສະເໜີຂອງນາຍົກລັດຖະມົນຕີ.

3.2 ດ້ານບຸກຄະລາກອນ

3.2.1. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

3.2.2. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານປະເທດ ແລະ ຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

3.2.3. ເລືອກຕັ້ງ ຫຼື ປົດຕຳແໜ່ງ ນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານປະເທດ;

3.2.4. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງປະທານປະເທດ;

3.2.5. ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕຳແໜ່ງປະທານກຳມາທິການ, ຫົວໜ້າຫ້ອງວ່າການ ສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

3.2.6. ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕຳແໜ່ງ ຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ຕາມການສະເໜີຂອງນາຍົກລັດຖະມົນຕີ;

3.2.7. ພິຈາລະນາ, ຮັບຮອງເອົາ ການສະເໜີແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕຳແໜ່ງ ສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ;

ສຳລັບ ບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ເຊັ່ນ ປະທານສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ, ປະທານສານປະຊາຊົນສູງສຸດ ຕ້ອງສາບານຕົນ ໃນການຮັບໜ້າທີ່ຕຳແໜ່ງ.

ມາດຕາ 13 (ປັບປຸງ) ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ

ສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ ດັ່ງນີ້:

1. ຕິດຕາມກວດກາ ການເຄື່ອນໄຫວຂອງລັດຖະບານ ໃນການປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ໂຄງການລະດັບຊາດ ແລະ ໂຄງການຂະໜາດໃຫຍ່ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

2. ຕິດຕາມກວດກາການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ;

3. ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບບົດລາຍງານການເຄື່ອນໄຫວວຽກງານ ແລະ ທິດທາງແຜນການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ;

4. ຕິດຕາມກວດກາສະພາປະຊາຊົນຂັ້ນແຂວງ ໃນການເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ;

5. ປະເມີນຜົນການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ. ສຳລັບວິທີການ ແລະ ລະບຽບການປະເມີນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ການສະເໜີ ສ້າງ ແລະ ປັບປຸງ ລັດຖະທຳມະນູນ ແລະ ກົດໝາຍ

ມາດຕາ 14 (ປັບປຸງ) ການສະເໜີ ສ້າງ ແລະ ປັບປຸງ ລັດຖະທຳມະນູນ

ປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ ຫຼື ສະມາຊິກສະພາແຫ່ງຊາດ ຈຳນວນໜຶ່ງສ່ວນສາມ ຂອງຈຳນວນທັງໝົດ ມີສິດສະເໜີໃຫ້ສະພາແຫ່ງຊາດ ພິຈາລະນາ ສ້າງ ແລະ ປັບປຸງ ລັດຖະທຳມະນູນ.

ໃນການ ສ້າງ ແລະ ປັບປຸງ ລັດຖະທຳມະນູນ ໃຫ້ແຕ່ງຕັ້ງຄະນະກຳມະການລະດັບຊາດ, ມີການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ທາບທາມຄຳເຫັນ ຢ່າງກວ້າງຂວາງ.

ການແຕ່ງຕັ້ງຄະນະກຳມະການລະດັບຊາດ ສ້າງ ແລະ ປັບປຸງ ລັດຖະທຳມະນູນ ແມ່ນ ສະພາແຫ່ງຊາດເປັນຜູ້ພິຈາລະນາຮັບຮອງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ.

ມາດຕາ 15 (ປັບປຸງ) ການສະເໜີຮ່າງກົດໝາຍ

ການຈັດຕັ້ງທີ່ມີສິດສະເໜີສ້າງຮ່າງກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນ ລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍການສ້າງນິຕິກຳ ກ່ອນຈະສ້າງ ຫຼື ປັບປຸງກົດໝາຍໃດໜຶ່ງຕາມແຜນການ ຕ້ອງຍື່ນຄຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ໂດຍແຈ້ງ ຈຸດປະສົງ ແລະ ເຫດຜົນ ຂອງການ ສ້າງຮ່າງກົດໝາຍ ຫຼື ປັບປຸງກົດໝາຍນັ້ນ.

ຄະນະປະຈຳສະພາແຫ່ງຊາດ ຕ້ອງຕອບຄຳສະເໜີດັ່ງກ່າວ ເປັນລາຍລັກອັກສອນຢ່າງຊ້າ ບໍ່ໃຫ້ເກີນສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳສະເໜີນັ້ນ ເປັນຕົ້ນໄປ.

ມາດຕາ 16 (ປັບປຸງ) ການພິຈາລະນາຮ່າງກົດໝາຍ ຢູ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ

ການຈັດຕັ້ງທີ່ໄດ້ ສ້າງ ຫຼື ປັບປຸງ ຮ່າງກົດໝາຍສຳເລັດແລ້ວ ຕ້ອງສະເໜີຮ່າງກົດໝາຍນັ້ນ ຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ຢ່າງຊ້າ ຫົກສິບວັນ ກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ.

ຄະນະປະຈຳສະພາແຫ່ງຊາດ ມອບຮ່າງກົດໝາຍ ໃຫ້ກຳມາທິການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ກວດກາເນື້ອໃນຮອບດ້ານ ແລ້ວລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດພິຈາລະນາ.

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງ ກ່ຽວກັບການນຳເອົາຮ່າງກົດໝາຍນັ້ນ ໄປປຶກສາຫາລືກັບອົງການຈັດຕັ້ງລັດ ແລະ ປະຊາຊົນ ດ້ວຍຮູບການຕ່າງໆ ແລ້ວນຳມາ ຄົ້ນຄວ້າ ແລະ ປັບປຸງຄືນ ກ່ອນນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດພິຈາລະນາ.

**ມາດຕາ 17 (ໃໝ່) ການພິຈາລະນາຮ່າງກົດໝາຍ ຢູ່ກອງປະຊຸມສະພາແຫ່ງຊາດ**

ສະພາແຫ່ງຊາດ ນຳເອົາຮ່າງກົດໝາຍມາພິຈາລະນາຢູ່ກອງປະຊຸມ ເທື່ອດຽວ ຫຼື ສອງເທື່ອ, ເວັ້ນເສຍແຕ່ຮ່າງກົດໝາຍບໍ່ໄດ້ຖືກຮັບຮອງຈາກກອງປະຊຸມສະພາແຫ່ງຊາດ ຫຼື ຮ່າງກົດໝາຍຖືກນຳສະເໜີເພື່ອຂໍຄຳເຫັນເບື້ອງຕົ້ນ ຊຶ່ງການຈັດຕັ້ງທີ່ມີສິດສະເໜີສ້າງກົດໝາຍ ຕ້ອງປັບປຸງກົດໝາຍດັ່ງກ່າວ ຕາມຄຳເຫັນຂອງກອງປະຊຸມສະພາແຫ່ງຊາດ ເພື່ອນຳສະເໜີເຂົ້າກອງປະຊຸມສະພາແຫ່ງຊາດ ໃນວາລະຕໍ່ໄປ.

**ມາດຕາ 18 (ປັບປຸງ) ຂັ້ນຕອນການພິຈາລະນາ ແລະ ຮັບຮອງເອົາຮ່າງກົດໝາຍ ຢູ່ກອງປະຊຸມສະພາແຫ່ງຊາດ**

ປະທານກອງປະຊຸມສະພາແຫ່ງຊາດ ສະເໜີໃຫ້ຄະນະຮັບຜິດຊອບປ້ອງກັນຮ່າງກົດໝາຍ ເປັນຜູ້ສະເໜີຮ່າງກົດໝາຍໂດຍສັງລວມແຕ່ລະ ພາກ, ໝວດ, ມາດຕາ ຕໍ່ກອງປະຊຸມສະພາແຫ່ງຊາດ. ຈາກນັ້ນປະທານຈຶ່ງເຈາະຈີ້ມບັນຫາທີ່ເປັນພື້ນຖານຂອງຮ່າງກົດໝາຍ ເພື່ອໃຫ້ສະມາຊິກສະພາແຫ່ງຊາດປະກອບຄຳເຫັນ.

ພາຍຫຼັງການປະກອບຄຳເຫັນແລ້ວ ຄະນະຮັບຜິດຊອບປ້ອງກັນຮ່າງກົດໝາຍ ຊີ້ແຈງ ແລະ ອະທິບາຍບັນຫາທີ່ສະມາຊິກສະພາແຫ່ງຊາດ ສົນໃຈ ແລະ ຍົກຂຶ້ນ ຈາກນັ້ນຈຶ່ງໃຫ້ກອງປະຊຸມພິຈາລະນາ ແລະ ລົງຄະແນນສຽງຮັບຮອງເອົາ.

ໃນກໍລະນີ ຊື່, ເນື້ອໃນບາງມາດຕາ ຂອງກົດໝາຍ ທີ່ຍັງບໍ່ທັນເປັນເອກະພາບກັນ ຕ້ອງໄດ້ລົງຄະແນນສຽງຮັບຮອງສະເພາະ ຊື່, ເນື້ອໃນບາງມາດຕາ ຂອງກົດໝາຍນັ້ນ.

## ໝວດທີ 4
## ການສະເໜີ ແລະ ການພິຈາລະນາ ບັນຫາສຳຄັນພື້ນຖານຂອງປະເທດຊາດ

**ມາດຕາ 19 ການສະເໜີ ບັນຫາສຳຄັນພື້ນຖານຂອງປະເທດຊາດ**

ອົງການລັດຂັ້ນສູນກາງ ຕ້ອງສະເໜີບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້.

**ມາດຕາ 20 ການພິຈາລະນາ ບັນຫາສຳຄັນພື້ນຖານຂອງປະເທດຊາດ ຢູ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ**

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າ ແລະ ລາຍງານ ບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້.

**ມາດຕາ 21 ການພິຈາລະນາ ບັນຫາສຳຄັນພື້ນຖານຂອງປະເທດຊາດ ຢູ່ກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງປະເທດຊາດຕາມການສະເໜີຂອງ ລັດຖະບານ ແລະ ອົງການອື່ນທີ່ກ່ຽວຂ້ອງຂອງລັດ.

## ໝວດທີ 5
## ການສະເໜີ ແລະ ການຕິດຕາມກວດກາ ຂອງສະພາແຫ່ງຊາດ

**ມາດຕາ 22 ການສະເໜີ ແລະ ການພິຈາລະນາແຜນການຕິດຕາມກວດກາ ຂອງສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າ, ສ້າງ ແລະ ສະເໜີ ແຜນການຕິດຕາມກວດກາຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ.

**ມາດຕາ 23 (ປັບປຸງ) ການຈັດຕັ້ງປະຕິບັດແຜນການຕິດຕາມກວດກາຂອງສະພາແຫ່ງຊາດ**

ການຈັດຕັ້ງປະຕິບັດແຜນການຕິດຕາມກວດກາຂອງສະພາແຫ່ງຊາດ ດຳເນີນໂດຍ:

1. ກອງປະຊຸມສະພາແຫ່ງຊາດ;
2. ຄະນະປະຈຳສະພາແຫ່ງຊາດ;
3. ກຳມາທິການສະພາແຫ່ງຊາດ;
4. ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ;
5. ສະມາຊິກສະພາແຫ່ງຊາດ.

**ມາດຕາ 24 (ປັບປຸງ) ການລາຍງານ ແລະ ການພິຈາລະນາ ການຕິດຕາມກວດກາຂອງສະພາແຫ່ງຊາດ**

ການລາຍງານ ແລະ ການພິຈາລະນາການຕິດຕາມກວດກາ ຢູ່ກອງປະຊຸມສະພາແຫ່ງຊາດ ໃຫ້ດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ການຮັບຟັງການລາຍງານ ກ່ຽວກັບການຕິດຕາມກວດກາຂອງບັນດາການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຂໍ້ 1 ຫາ ຂໍ້ 3 ຂອງກົດໝາຍສະບັບນີ້;
2. ປະທານກອງປະຊຸມ ມີຄຳເຫັນເຈາະຈີ້ມ;
3. ການປະກອບຄຳເຫັນ ຕໍ່ການລາຍງານດັ່ງກ່າວ;
4. ການຮັບຟັງການ ຊີ້ແຈງ, ອະທິບາຍ ຂອງພາກສ່ວນທີ່ຖືກຕິດຕາມກວດກາ;
5. ການຊັກຖາມກັບທີ່ຕໍ່ບັນຫາທີ່ບໍ່ທັນຈະແຈ້ງ;
6. ພາກສ່ວນທີ່ຖືກຕິດຕາມກວດກາ ຕອບຄຳຊັກຖາມ;
7. ການພິຈາລະນາຮັບຮອງເອົາຜົນການຕິດຕາມກວດກາ ແລະ ມາດຕະການແກ້ໄຂ;
8. ການຮັບຟັງການລາຍງານ ກ່ຽວກັບການຈັດຕັ້ງປະຕິບັດຜົນການຕິດຕາມກວດກາ.

ສຳລັບການລາຍງານ ແລະ ການພິຈາລະນາ ການຕິດຕາມກວດກາຂອງ ຄະນະປະຈຳສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາແຫ່ງຊາດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

# ພາກທີ III
# ໂຄງປະກອບຂອງສະພາແຫ່ງຊາດ

**ມາດຕາ 25 (ປັບປຸງ) ໂຄງປະກອບຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີໂຄງປະກອບ ດັ່ງນີ້:

1. ສະມາຊິກສະພາແຫ່ງຊາດ;
2. ຄະນະປະຈຳສະພາແຫ່ງຊາດ;
3. ປະທານ, ຮອງປະທານ ສະພາແຫ່ງຊາດ;

4. ກຳມາທິການສະພາແຫ່ງຊາດ;

5. ຫ້ອງວ່າການສະພາແຫ່ງຊາດ.

## ໝວດທີ 1
## ສະມາຊິກສະພາແຫ່ງຊາດ

### ມາດຕາ 26 (ປັບປຸງ) ສະມາຊິກສະພາແຫ່ງຊາດ

ສະມາຊິກສະພາແຫ່ງຊາດ ແມ່ນ ຕົວແທນແຫ່ງ ສິດ ແລະ ຜົນປະໂຫຍດ ຂອງປະຊາຊົນລາວບັນດາເຜົ່າ ຊຶ່ງແມ່ນ ພົນລະເມືອງລາວເປັນຜູ້ເລືອກຕັ້ງ ແລະ ຢູ່ພາຍໃຕ້ການກວດກາຂອງປະຊາຊົນ ໂດຍຜ່ານແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ສະຫະພັນກຳມະບານລາວ, ສະຫະພັນແມ່ຍິງລາວ ແລະ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ.

### ມາດຕາ 27 (ປັບປຸງ) ມາດຕະຖານຂອງສະມາຊິກສະພາແຫ່ງຊາດ

ສະມາຊິກສະພາແຫ່ງຊາດ ມີມາດຕະຖານ ດັ່ງນີ້:

1. ເປັນພົນລະເມືອງລາວ ໂດຍກຳເນີດ;

2. ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຈົງຮັກພັກດີ ແລະ ຕັ້ງໜ້າບໍລິສຸດ ຕໍ່ປະເທດຊາດ, ຖືເອົາຜົນປະໂຫຍດຂອງປະຊາຊົນເປັນກົກ, ຮັບໃຊ້ປະຊາຊົນຢ່າງແທ້ຈິງ, ມີຄວາມອົດທົນ, ປະຢັດ, ສັດຊື່, ທ່ຽງທຳ, ບໍ່ອວດອີ່ງທະນົງຕົວ, ບໍ່ສວຍໃຊ້ອຳນາດ, ເດັດດ່ຽວຕ້ານການສໍ້ລາດບັງຫຼວງ, ຕ້ານພະຍາດອາດຍາສິດ ແລະ ເປັນແບບຢ່າງທີ່ດີໃນການປະຕິບັດກົດໝາຍ;

3. ກຳແໜ້ນ ແລະ ຍຶດໝັ້ນ ແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການ, ລັດຖະທຳມະນູນ ແລະ ກົດໝາຍ; ຮູ້ໂຄສະນາ ແລະ ສຶກສາອົບຮົມປະຊາຊົນ, ເດັດດ່ຽວສູ້ຊົນເຮັດໃຫ້ປະຊາຊົນ ຮັ່ງມີ ຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີ ປອງດອງ ປະຊາທິປະໄຕ ຍຸຕິທຳ ແລະ ສີວິໄລ;

4. ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ, ຄົ້ນຄວ້າ, ມີຄຳເຫັນ ຕໍ່ ບັນຫາສຳຄັນພື້ນຖານຂອງປະເທດຊາດ, ຂອງທ້ອງຖິ່ນ ແລະ ສາມາດປະຕິບັດໜ້າທີ່ຂອງຕົນໄດ້;

5. ມີລະດັບການສຶກສາຈົບຊັ້ນມັດທະຍົມຕອນຕົ້ນຂຶ້ນໄປ, ຮູ້ນຳໃຊ້ໄອທີ ແລະ ມີວິຊາສະເພາະໃດໜຶ່ງ;

6. ມີສຸຂະພາບດີ.

### ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ

ສະມາຊິກສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ເປັນແບບຢ່າງ ໃນການຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ເຄົາລົບ ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນ;

2. ໂຄສະນາ ເຜີຍແຜ່, ປຸກລະດົມ ປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນ ໃຫ້ເຊື່ອມຊຶມ ແລະ ເຂົ້າຮ່ວມໃນການປະຕິບັດ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ, ເຂົ້າຮ່ວມ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ໃຫ້ຮູ້ ແລະ ເຂົ້າໃຈ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ແລະ ຂອງສະມາຊິກສະພາແຫ່ງຊາດ;

3. ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດຢ່າງເປັນປົກກະຕິ; ໃນກໍລະນີ ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ ຍ້ອນສາເຫດຈໍາເປັນໃດໜຶ່ງ ຕ້ອງສະເໜີຢ່າງເປັນລາຍລັກອັກສອນ ເພື່ອຂໍອະນຸຍາດນໍາປະທານຄະນະປະຈໍາສະພາແຫ່ງຊາດ;

4. ຄົ້ນຄວ້າ ແລະ ກະກຽມ ເນື້ອໃນ ເພື່ອປະກອບຄໍາເຫັນໃນກອງປະຊຸມ ແລະ ລົງຄະແນນສຽງດ້ວຍຄວາມຮັບຜິດຊອບສູງ;

5. ຊັກຖາມ ປະທານ, ຄະນະປະຈໍາສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ ໃນກອງປະຊຸມສະພາແຫ່ງຊາດ;

6. ລາຍງານການເຄື່ອນໄຫວວຽກງານ ຕໍ່ປະຊາຊົນໃນເຂດເລືອກຕັ້ງຂອງຕົນ ແລະ ເຂົ້າຮ່ວມກອງປະຊຸມຄົບຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງຂອງຕົນ;

7. ໄກ້ຊິດຕິດແທດ, ພົບປະ, ຮັບຕ້ອນ ປະຊາຊົນ, ເກັບກໍາ ແລະ ນໍາເອົາຄວາມຄິດຄວາມເຫັນ ແລະ ຄໍາສະເໜີຂອງປະຊາຊົນ ເພື່ອສະເໜີຕໍ່ ສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງພິຈາລະນາ, ແກ້ໄຂ ທັງຕິດຕາມຜົນການແກ້ໄຂ;

8. ໃຫ້ຄໍາປຶກສາ ແລະ ຄໍາແນະນໍາແກ່ພົນລະເມືອງ ກ່ຽວກັບ ການຍື່ນຄໍາຮ້ອງທຸກ ແລະ ບັນຫາຕ່າງໆ ທີ່ຕິດພັນກັບຜົນປະໂຫຍດຂອງປະຊາຊົນ;

9. ເຂົ້າຮ່ວມ ກອງປະຊຸມ, ການເຄື່ອນໄຫວ ແລະ ພິທີທີ່ສໍາຄັນຕ່າງໆ ຂອງອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ຕາມການເຊີນ ຫຼື ໂດຍໜ້າທີ່;

10. ໄດ້ຮັບ ຫຼື ສະເໜີເອົາ ຂໍ້ມູນ ຂ່າວສານ ທີ່ຈໍາເປັນຈາກພາກສ່ວນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຂອງຕົນ;

11. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະໄລຍະ ເປັນລາຍລັກອັກສອນໃຫ້ກໍາມາທິການທີ່ຕົນສັງກັດ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງຂອງຕົນ. ສໍາລັບຜູ້ເປັນທັງສະມາຊິກສະພາປະຊາຊົນຂັ້ນແຂວງ ຍັງຕ້ອງລາຍງານສະພາປະຊາຊົນຂັ້ນແຂວງ ທີ່ຕົນເປັນສະມາຊິກອີກດ້ວຍ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 29 (ປັບປຸງ) ການສັງກັດ, ການຄອບຕໍາແໜ່ງ ແລະ ການຍົກຍ້າຍ ຂອງສະມາຊິກສະພາແຫ່ງຊາດ

ສະມາຊິກສະພາແຫ່ງຊາດ ແຕ່ລະທ່ານ ສັງກັດຢູ່ໃນ ໜຶ່ງ ຫຼື ສອງ ກໍາມາທິການ ແລະ ການຈັດຕັ້ງອື່ນຂອງສະພາແຫ່ງຊາດ, ເປັນສະມາຊິກສະພາແຫ່ງຊາດ ປະຈໍາການ ຫຼື ຄອບຕໍາແໜ່ງ ຕາມການຕົກລົງຂອງຄະນະປະຈໍາສະພາແຫ່ງຊາດ.

ສະມາຊິກສະພາແຫ່ງຊາດ ທີ່ຖືກຍົກຍ້າຍບ່ອນປະຈໍາການ ໃຫ້ປະຕິບັດ ດັ່ງນີ້:

1. ໄປປະຈໍາການຢູ່ສູນກາງ ຍັງຮັກສາເຂດເລືອກຕັ້ງຂອງຕົນໄວ້ຄືເກົ່າ;

2. ໄປປະຈໍາການຢູ່ແຂວງອື່ນ ໃຫ້ຖືເອົາແຂວງນັ້ນ ເປັນເຂດເລືອກຕັ້ງຂອງຕົນ ໃນກໍລະນີຍົກຍ້າຍກັບຄືນມາປະຈໍາການຢູ່ບ່ອນເກົ່າ ໃຫ້ຖືເອົາເຂດເລືອກຕັ້ງເດີມ ທີ່ຜູ້ກ່ຽວໄດ້ຮັບສະໝັກເລືອກຕັ້ງ.

### ມາດຕາ 30 (ປັບປຸງ) ນະໂຍບາຍຕໍ່ສະມາຊິກສະພາແຫ່ງຊາດ

ສະມາຊິກສະພາແຫ່ງຊາດ ໄດ້ຮັບນະໂຍບາຍ ເຊັ່ນ ເງິນອຸດໜູນສະມາຊິກສະພາແຫ່ງຊາດ, ເງິນເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ, ການກວດສຸຂະພາບ ແລະ ນະໂຍບາຍອື່ນ.

ສະມາຊິກສະພາແຫ່ງຊາດ ຜູ້ເປັນ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ ເມື່ອອອກອາຍຸກະສຽນບຳນານ ກໍໃຫ້ປະຕິບັດຕາມກົດໝາຍ, ແຕ່ໃຫ້ສືບຕໍ່ປະຕິບັດໜ້າທີ່ສະມາຊິກສະພາແຫ່ງຊາດ ໃຫ້ໝົດອາຍຸການຂອງສະພາແຫ່ງຊາດ ຊຸດນັ້ນ.

ສຳລັບ ນະໂຍບາຍໃນແຕ່ລະດ້ານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 31 (ປັບປຸງ) ອະພິສິດຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ມີອະພິສິດຕາມກົດໝາຍ ຈະບໍ່ຖືກດຳເນີນຄະດີອາຍາ ຫຼື ຈັບຕົວ, ກັກຕົວ, ກັກຂັງ ຫຼື ກວດຄົ້ນເຄຫະສະຖານ ແລະ ສະຖານທີ່ເຮັດວຽກ ຂອງຕົນ ຖ້າຫາກບໍ່ໄດ້ຮັບຄວາມເຫັນດີ ຈາກຄະນະປະຈຳສະພາແຫ່ງຊາດ.

ຖ້າຫາກວ່າມີຄວາມຈຳເປັນ ຕ້ອງໄດ້ ຈັບຕົວ, ກັກຕົວ, ກັກຂັງ ຫຼື ກວດຄົ້ນ ເຄຫະສະຖານ ແລະ ສະຖານທີ່ເຮັດວຽກ ຂອງສະມາຊິກສະພາແຫ່ງຊາດ ໃນກໍລະນີ ການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ເຈົ້າໜ້າທີ່ກ່ຽວຂ້ອງທີ່ໄດ້ ຈັບຕົວ, ກັກຕົວ ຫຼື ກັກຂັງ ຫຼື ກວດຄົ້ນ ເຄຫະສະຖານ ແລະ ສະຖານທີ່ເຮັດວຽກ ຂອງສະມາຊິກສະພາແຫ່ງຊາດ ຕ້ອງລາຍງານໃນທັນທີ ຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອຂໍຄວາມເຫັນກ່ຽວກັບການດຳເນີນຄະດີໃນຂັ້ນຕໍ່ໄປ.

ສະມາຊິກສະພາແຫ່ງຊາດຈະບໍ່ຖືກ ໄລ່ອອກ ຫຼື ບັງຄັບໃຫ້ອອກຈາກ ອົງການ, ການຈັດຕັ້ງ ບ່ອນທີ່ສະມາຊິກສະພາແຫ່ງຊາດສັງກັດ ໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະປະຈຳສະພາແຫ່ງຊາດ.

ໃນໄລຍະການສືບສວນ-ສອບສວນນັ້ນ ສະມາຊິກສະພາແຫ່ງຊາດຜູ້ຖືກດຳເນີນຄະດີ ຍັງມີສິດເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດໄດ້ ແຕ່ຕ້ອງໄດ້ຮັບການເຫັນດີຈາກຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 32 ການສິ້ນສຸດການເປັນສະມາຊິກສະພາແຫ່ງຊາດ**

ການເປັນສະມາຊິກສະພາແຫ່ງຊາດ ຈະສິ້ນສຸດໃນກໍລະນີ ດັ່ງນີ້:

1. ໝົດອາຍຸການຂອງສະພາແຫ່ງຊາດຊຸດນັ້ນ;
2. ລາອອກດ້ວຍເຫດຜົນຈຳເປັນ;
3. ບໍ່ສາມາດປະຕິບັດໜ້າທີ່ໄດ້ ດ້ວຍເຫດຜົນທາງດ້ານສຸຂະພາບ ໂດຍມີການຢັ້ງຢືນຈາກຄະນະແພດ;
4. ໄປ ປະຕິບັດໜ້າທີ່ຢູ່ຕ່າງປະເທດ ຫຼື ສຶກສາຢູ່ ພາຍໃນ ຫຼື ຕ່າງປະເທດ ເປັນປະຈຳແຕ່ ສາມປີ ຂຶ້ນໄປ;
5. ຖືກປົດອອກຈາກການເປັນສະມາຊິກສະພາແຫ່ງຊາດ;
6. ເສຍຊີວິດ.

## ໝວດທີ 2
## ຄະນະປະຈຳສະພາແຫ່ງຊາດ

**ມາດຕາ 33 ທີ່ຕັ້ງ ແລະ ພາລະບົດບາດຂອງຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ແມ່ນ ອົງການປະຈຳການຂອງສະພາແຫ່ງຊາດ, ມີພາລະບົດບາດ ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ແທນສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ໃນເວລາສະພາແຫ່ງຊາດ ບໍ່ໄດ້ເປີດກອງປະຊຸມ.

ມາດຕາ 34 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະປະຈໍາສະພາແຫ່ງຊາດ

ຄະນະປະຈໍາສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດ້ານນິຕິບັນຍັດ

1.1. ສະເໜີ ສ້າງ, ປັບປຸງ, ຕີຄວາມໝາຍ ແລະ ອະທິບາຍ ລັດຖະທໍາມະນູນ, ກົດໝາຍ;

1.2. ສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ ແຜນການ, ການສ້າງ ແລະ ປັບປຸງ ກົດໝາຍ;

1.3. ຄົ້ນຄວ້າ, ພິຈາລະນາ ແລະ ສ້າງລັດຖະບັນຍັດ ແລ້ວສະເໜີຕໍ່ປະທານປະເທດ ພິຈາລະນາລົງລາຍເຊັນປະກາດໃຊ້;

1.4. ອອກ ມະຕິ, ຄໍາແນະນໍາ ການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ ແລະ ວຽກງານອື່ນທີ່ຕົນຮັບຜິດຊອບ;

1.5. ພິຈາລະນາ, ຕົກລົງ ການໃຫ້ສັດຕະຍາບັນ, ການເຂົ້າຮ່ວມເປັນພາຄີ ຫຼື ຍົກເລີກ ສົນທິສັນຍາທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ ຕາມການສະເໜີຂອງນາຍົກລັດຖະມົນຕີ;

2. ດ້ານການຕົກລົງບັນຫາສໍາຄັນພື້ນຖານຂອງປະເທດຊາດ

2.1. ດ້ານການເມືອງ ແລະ ການປົກຄອງ

2.1.1. ສະເໜີແຜນການເຄື່ອນໄຫວວຽກງານ ຂອງສະພາແຫ່ງຊາດ;

2.1.2. ສະເໜີກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຕົກລົງບັນຫາສົງຄາມ ຫຼື ສັນຕິພາບ;

2.1.3. ພົວພັນ, ຮ່ວມມື ກັບລັດຖະສະພາ ຕ່າງປະເທດ, ພາກພື້ນ ແລະ ສາກົນ;

2.1.4. ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງຕົນ ໃນລະຫວ່າງສອງກອງປະຊຸມ;

2.1.5. ສະເໜີກອງປະຊຸມສະພາແຫ່ງຊາດ ພິຈາລະນາຍຸບສະພາປະຊາຊົນຂັ້ນແຂວງ ໃນກໍລະນີສະພາປະຊາຊົນນັ້ນ ຫາກສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງ ປະເທດຊາດ ແລະ ປະຊາຊົນຕາມການສະເໜີຂອງ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ການຈັດຕັ້ງມະຫາຊົນ ຂັ້ນແຂວງດັ່ງກ່າວ;

2.1.6. ຄົ້ນຄວ້າ, ປະກອບຄໍາເຫັນ ຕໍ່ແຜນການເຄື່ອນໄຫວວຽກງານຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ;

2.1.7. ກະກຽມ ແລະ ຮຽກໂຮມ ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຮ່ວມກັບລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ.

2.2. ດ້ານເສດຖະກິດ-ສັງຄົມ

2.2.1. ຄົ້ນຄວ້າ ວິໄສທັດ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນການລົງທຶນຂອງລັດ, ການຈັດສັນງົບປະມານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ, ການດັດແກ້ແຜນການລົງທຶນຂອງລັດ ແລະ ການດັດແກ້ແຜນງົບປະມານແຫ່ງລັດ;

2.2.2. ຄົ້ນຄວ້າ ນະໂຍບາຍພື້ນຖານດ້ານ ການເງິນ, ເງິນຕາ, ອັດຕາສ່ວນການຂາດດຸນງົບປະມານ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ;

2.2.3. ຄົ້ນຄວ້າ, ພິຈາລະນາ ການນໍາໃຊ້ຄັງສະສົມແຫ່ງລັດ;

2.2.4. ຄົ້ນຄວ້າ, ພິຈາລະນາ ຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈໍາປີ ເພື່ອນໍາສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ;

2.2.5. ພິຈາລະນາ ການກໍານົດ, ການປ່ຽນແປງ, ການລຶບລ້າງ ຫຼື ການຍົກເວັ້ນ ອັດຕາ ພາສີ ແລະ ອາກອນ ໃນກໍລະນີທີ່ຈໍາເປັນ ແລະ ຮີບດ່ວນ ໃນເວລາສະພາແຫ່ງຊາດ ບໍ່ໄດ້ເປີດກອງປະຊຸມ.

2.3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ

2.3.1. ດ້ານການຈັດຕັ້ງ

2.3.1.1. ສະເໜີສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ, ໂຮມເຂົ້າ, ຍຸບເລີກ ກົງຈັກຂອງສະພາແຫ່ງຊາດ;

2.3.1.2. ສ້າງຕັ້ງ, ໂຮມເຂົ້າ, ຍຸບເລີກ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ;

2.3.1.3. ແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດໃໝ່.

2.3.2. ດ້ານບຸກຄະລາກອນ

2.3.2.1. ແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຂົ້າສັງກັດໃນແຕ່ລະກຳມາທິການ ຕາມຄວາມເໝາະສົມ;

2.3.2.2. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານກຳມາທິການ, ຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ ສະພາແຫ່ງຊາດ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ;

2.3.2.3. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ;

2.3.2.4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ພິພາກສາ, ຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ;

2.3.2.5. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານສານປະຊາຊົນ ພາກ ພາຍຫຼັງທີ່ສະພາປະຊາຊົນ ຫຼື ຄະນະປະຈຳສະພາປະຊາຊົນ ຂັ້ນແຂວງ ບ່ອນທີ່ສານປະຊາຊົນນັ້ນຕັ້ງຢູ່ ພິຈາລະນາ, ຮັບຮອງເອົາແລ້ວ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ;

2.3.2.6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ພິພາກສາ ຂອງສານປະຊາຊົນ ພາກ, ນະຄອນຫຼວງ, ແຂວງ, ເຂດ ພາຍຫຼັງທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ບ່ອນທີ່ສານປະຊາຊົນນັ້ນຕັ້ງຢູ່ ພິຈາລະນາ, ຮັບຮອງເອົາແລ້ວ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ;

2.3.2.7. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານສານທະຫານຂັ້ນສູງ, ປະທານ, ຮອງປະທານ ສານທະຫານ ພາກ, ນະຄອນຫຼວງ, ແຂວງ ແລະ ຜູ້ພິພາກສາ ຂອງສານທະຫານດັ່ງກ່າວ ພາຍຫຼັງການເຫັນດີ ຈາກລັດຖະມົນຕີກະຊວງປ້ອງກັນປະເທດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ;

2.3.2.8. ແຕ່ງຕັ້ງ ຄະນະກຳມະການໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;

2.3.2.9. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານອົງການກວດສອບປະຈຳພາກ ຕາມການສະເໜີຂອງປະທານອົງການກວດສອບແຫ່ງລັດ;

2.3.2.10. ພິຈາລະນາ, ຮັບຮອງເອົາການ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເປັນລາຍບຸກຄົນທີ່ດຳລົງຕຳແໜ່ງ ໂດຍສະພາແຫ່ງຊາດ ຮັບຮອງເອົາການສະເໜີແຕ່ງຕັ້ງ;

2.3.2.11. ພິຈາລະນາ ຕົກລົງ ການຍົກຍ້າຍ ສະມາຊິກສະພາແຫ່ງຊາດປະຈຳການ ໄປຮັບໜ້າທີ່ອື່ນ, ການຍົກຍ້າຍສະມາຊິກສະພາແຫ່ງຊາດຄວບຕຳແໜ່ງ ໄປປະຕິບັດໜ້າທີ່ຢູ່ເຂດເລືອກຕັ້ງອື່ນ ແລະ ການຍ້ອງຍໍສະມາຊິກສະພາແຫ່ງຊາດຜູ້ມີຜົນງານ.

3. ດ້ານການຕິດຕາມກວດກາ

3.1. ຕິດຕາມກວດກາ ການປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ແລະ ໂຄງການຂອງລັດຖະບານ;

3.2. ຕິດຕາມ ກວດກາ ການເຄື່ອນໄຫວວຽກງານ ຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ, ອົງການສືບສວນ-ສອບສວນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;

3.3. ໂຈະ ການຈັດຕັ້ງປະຕິບັດນິຕິກຳຂອງ ລັດຖະບານ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ ແລະ ປະທານສະພາປະຊາຊົນຂັ້ນແຂວງ ທີ່ຂັດກັບ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີຂອງ ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ;

3.4. ຮັບ, ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ;

3.5. ຕິດຕາມ ກວດກາ ການໂຄສະນາ ເຜີຍແຜ່, ການປະເມີນການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳອື່ນ.

### ມາດຕາ 35 (ປັບປຸງ) ໂຄງປະກອບຂອງຄະນະປະຈຳສະພາແຫ່ງຊາດ

ຄະນະປະຈຳສະພາແຫ່ງຊາດ ປະກອບດ້ວຍ:

1. ປະທານ;
2. ຮອງປະທານ;
3. ກຳມະການ.

ປະທານ ແລະ ຮອງປະທານ ສະພາແຫ່ງຊາດ ເປັນທັງ ປະທານ ແລະ ຮອງປະທານ ຄະນະປະຈຳສະພາແຫ່ງຊາດ.

### ມາດຕາ 36 ການແບ່ງຄວາມຮັບຜິດຊອບພາຍໃນຄະນະປະຈຳສະພາແຫ່ງຊາດ

ປະທານຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຮັບຜິດຊອບລວມ, ນຳພາ ຊີ້ນຳ ວຽກງານຂອງຄະນະປະຈຳສະພາແຫ່ງຊາດ.

ປະທານຄະນະປະຈຳສະພາແຫ່ງຊາດ ຈະມອບໝາຍໃຫ້ ຮອງປະທານ ຫຼື ກຳມະການ ຄະນະປະຈຳທ່ານໃດໜຶ່ງເຮັດໜ້າທີ່ແທນ ໃນເວລາປະທານຕິດຂັດ.

ຮອງປະທານຄະນະປະຈຳສະພາແຫ່ງຊາດ ມີໜ້າທີ່ຊ່ວຍປະທານ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເປັນຜູ້ຊີ້ນຳວຽກງານໃດໜຶ່ງ ແລະ ຮັບຜິດຊອບວຽກງານອື່ນ ຕາມການມອບໝາຍຂອງປະທານຄະນະປະຈຳສະພາແຫ່ງຊາດ.

ກຳມະການຄະນະປະຈຳສະພາແຫ່ງຊາດ ມີໜ້າທີ່ຊ່ວຍ ປະທານ ແລະ ຮອງປະທານ ຄະນະປະຈຳສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເປັນຜູ້ຮັບຜິດຊອບວຽກງານຈຳນວນໜຶ່ງ ຕາມການມອບໝາຍຂອງ ປະທານ ຫຼື ຮອງປະທານ ຄະນະປະຈຳສະພາແຫ່ງຊາດ.

### ມາດຕາ 37 (ປັບປຸງ) ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ

ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ມີ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນເຂດເລືອກຕັ້ງຂອງຕົນ ໂດຍມີການປະສານສົມທົບກັບ ສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງທ້ອງຖິ່ນ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ.

ສຳລັບ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ໃນກໍລະນີມີຄວາມຈໍາເປັນ ຄະນະປະຈໍາສະພາແຫ່ງຊາດ ອາດສ້າງຕັ້ງກົງຈັກເສນາທິການໃດໜຶ່ງຕື່ມ ກໍໄດ້.

## ໝວດທີ 3
## ປະທານ ແລະ ຮອງປະທານ ສະພາແຫ່ງຊາດ

**ມາດຕາ 38 ປະທານສະພາແຫ່ງຊາດ**

ປະທານສະພາແຫ່ງຊາດ ແມ່ນ ຫົວໜ້າສູງສຸດຂອງສະພາແຫ່ງຊາດ, ເປັນຜູ້ ນໍາພາ ແລະ ຊີ້ນໍາວຽກງານຂອງສະພາແຫ່ງຊາດ ທັງເປັນຜູ້ຕາງໜ້າສະພາແຫ່ງຊາດ ໃນການພົວພັນວຽກງານ ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 39 (ປັບປຸງ) ສິດ ແລະ ໜ້າທີ່ຂອງປະທານສະພາແຫ່ງຊາດ**

ປະທານສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນປະທານ ຄະນະປະທານ ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ແລະ ລົງລາຍເຊັນໃສ່ ລັດຖະທໍາມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ແລະ ເອກະສານອື່ນ ຂອງສະພາແຫ່ງຊາດ;
2. ນໍາພາ ຊີ້ນໍາ ແລະ ຕິດຕາມກວດກາ ການເຄື່ອນໄຫວວຽກງານຂອງ ຄະນະປະຈໍາສະພາແຫ່ງຊາດ, ກໍາມາທິການ, ຫ້ອງວ່າການ ສະພາແຫ່ງຊາດ ແລະ ກົງຈັກທີ່ຄະນະປະຈໍາສະພາແຫ່ງຊາດສ້າງຕັ້ງ;
3. ປຶກສາຫາລື, ປະສານສົມທົບ ວຽກງານສໍາຄັນຂອງປະເທດຊາດ ກັບ ປະທານປະເທດ, ນາຍົກລັດຖະມົນຕີ ແລະ ຫົວໜ້າອົງການຈັດຕັ້ງອື່ນ;
4. ນໍາພາ ຊີ້ນໍາ ວຽກງານຕ່າງປະເທດ ຂອງສະພາແຫ່ງຊາດ;
5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 40 (ປັບປຸງ) ຮອງປະທານສະພາແຫ່ງຊາດ**

ຮອງປະທານສະພາແຫ່ງຊາດ ມີໜ້າທີ່ຊ່ວຍປະທານສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ຮັບຜິດຊອບວຽກງານໃດໜຶ່ງ, ເປັນຜູ້ຮັກສາການແທນ, ເປັນປະທານ ກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຕາມການມອບໝາຍຂອງປະທານສະພາແຫ່ງຊາດ.

ຮອງປະທານສະພາແຫ່ງຊາດ ເປັນຄະນະປະທານກອງປະຊຸມສະພາແຫ່ງຊາດ.

## ໝວດທີ 4
## ກໍາມາທິການສະພາແຫ່ງຊາດ

**ມາດຕາ 41 ທີ່ຕັ້ງ ແລະ ພາລະບົດບາດ ຂອງກໍາມາທິການສະພາແຫ່ງຊາດ**

ກໍາມາທິການສະພາແຫ່ງຊາດ ແມ່ນ ກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ, ປະກອບດ້ວຍ ບັນດາສະມາຊິກສະພາແຫ່ງຊາດ, ມີພາລະບົດບາດເປັນເສນາທິການໃຫ້ ສະພາແຫ່ງຊາດ ແລະ ຄະນະປະຈໍາສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດວຽກງານຕາມຂອບເຂດ ສິດ ແລະ ໜ້າທີ່ ຂອງກໍາມາທິການ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການສະເພາະຂອງແຕ່ລະກໍາມາທິການຂອງສະພາແຫ່ງຊາດ.

**ມາດຕາ 42 (ປັບປຸງ) ກຳມາທິການຂອງສະພາແຫ່ງຊາດ**

ກຳມາທິການຂອງສະພາແຫ່ງຊາດ ແມ່ນ ກອງປະຊຸມຄົ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດນັ້ນ ພິຈາລະນາຮັບຮອງເອົາ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 43 (ປັບປຸງ) ສິດ ແລະ ໜ້າທີ່ ລວມຂອງກຳມາທິການ**

ກຳມາທິການ ມີ ສິດ ແລະ ໜ້າທີ່ລວມໃນການປະຕິບັດວຽກງານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ດັ່ງນີ້:

1. ສ້າງ ແຜນການ ແລະ ງົບປະມານ ການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະໄລຍະ;

2. ຄົ້ນຄວ້າ, ກວດກາ ແລະ ປະກອບຄຳເຫັນໃສ່ ຮ່າງກົດໝາຍ, ຮ່າງລັດຖະບັນຍັດ ແລະ ຮ່າງນິຕິກຳອື່ນ ຊຶ່ງຂະແໜງການທີ່ກ່ຽວຂ້ອງສະເໜີມາ;

3. ຄົ້ນຄວ້າການ ຕີຄວາມໝາຍ, ອະທິບາຍ ກົດໝາຍ;

4. ໂຄສະນາ ເຜີຍແຜ່ ກົດໝາຍ, ນິຕິກຳໃຕ້ກົດໝາຍ;

5. ເຂົ້າຮ່ວມແຕ່ຫົວທີກັບຂະແໜງການທີ່ກ່ຽວຂ້ອງເພື່ອ ຄົ້ນຄວ້າ, ກວດກາຄວາມຖືກຕ້ອງ ແລະ ປະກອບຄຳເຫັນໃສ່ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ;

6. ຄົ້ນຄວ້າ ການໂຈະການຈັດຕັ້ງປະຕິບັດ, ການປັບປຸງ, ຍົກເລີກ, ລົບລ້າງ ກົດໝາຍ ແລະ ນິຕິກຳອື່ນ;

7. ເກັບກຳ, ວິເຄາະ ຂໍ້ມູນ ຂ່າວສານ ກ່ຽວກັບບັນຫາໃດໜຶ່ງ ຂອງຂະແໜງການທີ່ຕົນຮັບຜິດຊອບ ເພື່ອສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂໃຫ້ຖືກຕ້ອງ ແລະ ຕິດຕາມຜົນການແກ້ໄຂບັນຫາດັ່ງກ່າວ;

8. ຄົ້ນຄວ້າ ການໃຫ້ສັດຕະຍາບັນ ຫຼື ການລົບລ້າງ ການເຂົ້າຮ່ວມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

9. ສະເໜີ ແຕ່ງຕັ້ງໜ່ວຍສະເພາະກິດ ເມື່ອມີຄວາມຈຳເປັນ;

10. ສະເໜີບັນຫາສຳຄັນທີ່ມີຄວາມຫຍຸ້ງຍາກ ແລະ ມາດຕະການແກ້ໄຂ;

11. ຮັບຕ້ອນ, ຈັດກອງປະຊຸມ ເພື່ອຮັບຟັງຄຳເຫັນຂອງ ປະຊາຊົນ ແລະ ອົງການຈັດຕັ້ງສັງຄົມ ກ່ຽວກັບບັນຫາສຳຄັນຕ່າງໆ;

12. ຊີ້ນຳ ວຽກງານວິຊາການ ຂອງກົມທີ່ເປັນເສນາທິການໃຫ້ຕົນ;

13. ປະສານງານກັບ ກຳມາທິການພາຍໃນສະພາແຫ່ງຊາດ ຫຼື ກັບກະຊວງ, ອົງການ ອື່ນທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຕົນ;

14. ຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ, ຕິດຕາມສະພາບການແກ້ໄຂຂໍ້ສະເໜີຂອງປະຊາຊົນ ຜ່ານສາຍດ່ວນຂອງກອງປະຊຸມສະພາແຫ່ງຊາດ;

15. ພົວພັນ, ຮ່ວມມື ກັບ ອົງການຈັດຕັ້ງຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;

16. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ຄະນະປະຈຳສະພາແຫ່ງຊາດ ຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 ສິດ ແລະ ໜ້າ ທີ່ສະເພາະຂອງແຕ່ລະກຳມາທິການ**

ສິດ ແລະ ໜ້າທີ່ ສະເພາະຂອງແຕ່ລະກຳມາທິການ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດ.

**ມາດຕາ 45 ໂຄງປະກອບຂອງກຳມາທິການສະພາແຫ່ງຊາດ**

ໂຄງປະກອບຂອງກຳມາທິການສະພາແຫ່ງຊາດ ມີ ດັ່ງນີ້:

1. ປະທານ;
2. ຮອງປະທານ;
3. ກຳມະການປະຈຳ;
4. ກຳມະການສັງກັດກຳມາທິການ;
5. ກົມທີ່ເປັນເສນາທິການ.

**ມາດຕາ 46 (ປັບປຸງ) ການແບ່ງຄວາມຮັບຜິດຊອບພາຍໃນກຳມາທິການສະພາແຫ່ງຊາດ**

ປະທານກຳມາທິການສະພາແຫ່ງຊາດ ເປັນຜູ້ຊີ້ນຳວຽກງານ ແລະ ນຳພາກອງປະຊຸມຂອງກຳມາທິການ, ຕາງໜ້າໃຫ້ກຳມາທິການ ລາຍງານ ແລະ ສະເໜີ ວຽກງານຕໍ່ຄະນະປະຈຳ ແລະ ກອງປະຊຸມ ສະພາແຫ່ງຊາດ.

ຮອງປະທານກຳມາທິການ ເປັນຜູ້ຊ່ວຍປະທານກຳມາທິການ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງກຳມາທິການ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງປະທານກຳມາທິການ.

ໃນກໍລະນີ ປະທານກຳມາທິການຕິດຂັດ ແມ່ນ ຮອງປະທານກຳມາທິການ ເປັນຜູ້ຮັກສາການແທນ ຕາມການມອບໝາຍ ຂອງປະທານກຳມາທິການ.

ກຳມະການປະຈຳ ແມ່ນ ສະມາຊິກສະພາແຫ່ງຊາດ ທີ່ປະຈຳການຢູ່ກຳມາທິການໃດໜຶ່ງ ມີໜ້າທີ່ຊ່ວຍ ປະທານ ແລະ ຮອງປະທານ ກຳມາທິການ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເປັນຜູ້ຮັບຜິດຊອບວຽກ ງານຈຳນວນໜຶ່ງ ຂອງກຳມາທິການ ຕາມການມອບໝາຍຂອງ ປະທານ ຫຼື ຮອງປະທານ ກຳມາທິການ ໂດຍມີ ຈຳນວນ ແຕ່ ໜຶ່ງ ຫາ ສາມ ທ່ານ.

ກຳມະການສັງກັດກຳມາທິການ ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງກຳມາທິການ ທີ່ຕົນສັງກັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ນິຕິກຳສະເພາະ ຫຼື ຕາມການມອບໝາຍ ຂອງປະທານກຳມາທິການ.

ກົມທີ່ເປັນເສນາທິການ ມີກິ່ງຈັກຊ່ວຍວຽກ, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຊຶ່ງໄດ້ກຳນົດໄວ້ໃນລະ ບຽບການຕ່າງຫາກ.

## ໝວດທີ 5
## ຫ້ອງວ່າການສະພາແຫ່ງຊາດ

**ມາດຕາ 47 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງຫ້ອງວ່າການສະພາແຫ່ງຊາດ**

ຫ້ອງວ່າການສະພາແຫ່ງຊາດ ແມ່ນ ກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ມີພາລະບົດບາດ ເປັນເຈົ້າ ການປະສານສົມທົບກັບ ບັນດາກົງຈັກຂອງສະພາແຫ່ງຊາດ ເພື່ອອຳນວຍຄວາມສະດວກໃນການ ເຄື່ອນໄຫວ ວຽກງານຂອງ ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງວ່າການສະພາແຫ່ງຊາດ**

ຫ້ອງວ່າການສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ເປັນເສນາທິການໃຫ້ແກ່ ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນວຽກງານຄົ້ນຄວ້າ-ສັງລວມເນື້ອໃນ, ວຽກງານຄຸ້ມຄອງ ບໍລິຫານ, ແຜນການ ແລະ ການເງິນ, ວຽກງານຈັດຕັ້ງ-ພະນັກງານ.

ສິດ ແລະ ໜ້າທີ່ລະອຽດ ຂອງຫ້ອງວ່າການສະພາແຫ່ງຊາດ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ ກຳນົດ.

**ມາດຕາ 49 (ປັບປຸງ) ໂຄງປະກອບຂອງຫ້ອງວ່າການສະພາແຫ່ງຊາດ**

ໂຄງປະກອບຂອງຫ້ອງວ່າການສະພາແຫ່ງຊາດ ມີ ດັ່ງນີ້:

1. ຫົວໜ້າຫ້ອງວ່າການ ທັງເປັນເລຂາທິການສະພາແຫ່ງຊາດ;
2. ຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ ສະພາແຫ່ງຊາດ;
3. ກົມ, ອົງການລັດທຽບເທົ່າກົມ.

**ມາດຕາ 50 (ປັບປຸງ) ຫົວໜ້າຫ້ອງວ່າການສະພາແຫ່ງຊາດ**

ຫົວໜ້າຫ້ອງວ່າການ ທັງເປັນເລຂາທິການ ສະພາແຫ່ງຊາດ ແມ່ນ ຜູ້ນຳພາ ຊີ້ນຳ ຄົ້ນຄວ້າ-ສັງລວມເນື້ອໃນວຽກງານ, ເປັນໂຄສົກຂອງສະພາແຫ່ງຊາດ ແລະ ຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນຂອງສະພາແຫ່ງຊາດ.

ສິດ ແລະ ໜ້າທີ່ ຂອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດ.

**ມາດຕາ 51 (ປັບປຸງ) ຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ ສະພາແຫ່ງຊາດ**

ຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ ສະພາແຫ່ງຊາດ ເປັນຜູ້ຊ່ວຍຫົວໜ້າຫ້ອງວ່າການສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຫ້ອງວ່າການສະພາແຫ່ງຊາດ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າຫ້ອງວ່າການ.

ໃນກໍລະນີ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຕິດຂັດ ແມ່ນ ຮອງຫົວໜ້າຫ້ອງວ່າການ ຫຼື ຮອງເລຂາທິການ ສະພາແຫ່ງຊາດ ຜູ້ຖືກມອບໝາຍຈາກຫົວໜ້າຫ້ອງວ່າການ ເປັນຜູ້ຮັກສາການແທນ.

**ມາດຕາ 52 (ປັບປຸງ) ສິດ ແລະ ໜ້າທີ່ຂອງກົມ, ອົງການລັດທຽບເທົ່າກົມ**

ສິດ, ໜ້າທີ່ ຂອງ ກົມ, ອົງການລັດທຽບເທົ່າກົມ ຂອງຫ້ອງວ່າການສະພາແຫ່ງຊາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IV
## ກອງປະຊຸມ
### ໝວດທີ 1
### ກອງປະຊຸມສະພາແຫ່ງຊາດ

**ມາດຕາ 53 ກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ມີ ສອງປະເພດ ດັ່ງນີ້:

1. ກອງປະຊຸມສະໄໝສາມັນ ຊຶ່ງປະກອບດ້ວຍ ກອງປະຊຸມຄັ້ງປະຖົມມະລືກ, ກອງປະຊຸມສະໄໝສາມັນ ປະຈຳປີ, ປະຈຳ ທຶກເດືອນຕົ້ນປີ ແລະ ກອງປະຊຸມທ້າຍສະໄໝ;
2. ກອງປະຊຸມສະໄໝວິສາມັນ.

**ມາດຕາ 54 (ປັບປຸງ) ກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ**

ກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ ແມ່ນ ກອງປະຊຸມສະໄໝສາມັນ ເທື່ອທີໜຶ່ງ ຂອງສະພາແຫ່ງຊາດຊຸດນັ້ນ ເປີດຂຶ້ນພາຍໃນເວລາ ຫົກສິບວັນ ພາຍຫຼັງສຳເລັດການເລືອກຕັ້ງສະມາຊິກສະພາແຫ່ງຊາດ

ຊຸດໃໝ່ ຊຶ່ງແມ່ນປະທານສະພາແຫ່ງຊາດ ຊຸດເກົ່າ ເປັນປະທານ ແລະ ຊີ້ນຳກອງປະຊຸມ ຈົນກວ່າໄດ້ເລືອກຕັ້ງປະທານສະພາແຫ່ງຊາດ ຊຸດໃໝ່.

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຟັງການລາຍງານ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ກ່ຽວກັບຜົນການເລືອກຕັ້ງ ແລະ ການຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ;

2. ເລືອກຕັ້ງ ປະທານສະພາແຫ່ງຊາດ ຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ຊຸດເກົ່າ;

3. ເລືອກຕັ້ງ ຮອງປະທານສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສະພາແຫ່ງຊາດ;

4. ເລືອກຕັ້ງ ປະທານປະເທດ ແລະ ຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

5. ເລືອກຕັ້ງ ນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານປະເທດ;

6. ເລືອກຕັ້ງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສຸນກາງ, ປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງປະທານປະເທດ;

7. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ ປະທານກຳມາທິການ ແລະ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

8. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ ຫຼື ຍຸບເລີກ ກົງຈັກຂອງສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

9. ພິຈາລະນາ, ຮັບຮອງເອົາ ການສະເໜີຂອງນາຍົກລັດຖະມົນຕີ ກ່ຽວກັບໂຄງປະກອບກົງຈັກຂອງລັດຖະບານ, ການແຕ່ງຕັ້ງບັນດາຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ;

10. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຫ້າປີ;

11. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ ຫ້າປີ ຂອງສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

12. ພິຈາລະນາ, ຮັບຮອງເອົາ ແຜນການສ້າງ ແລະ ປັບປຸງ ກົດໝາຍ ຫ້າປີ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

13. ພິຈາລະນາ, ຮັບຮອງເອົາ ແຜນການເຄື່ອນໄຫວວຽກງານ ຫ້າປີ ຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ;

14. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງປະເທດຊາດ.

**ມາດຕາ 55 (ປັບປຸງ) ກອງປະຊຸມສະໄໝສາມັນປະຈຳປີຂອງສະພາແຫ່ງຊາດ**

ກອງປະຊຸມສະໄໝສາມັນປະຈຳປີ ຂອງສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ປະຈຳປີຜ່ານມາ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດປະຈຳປີຕໍ່ໜ້າ;

2. ພິຈາລະນາ, ຮັບຮອງເອົາ ບົດລາຍງານຜົນການກວດສອບ ກ່ຽວກັບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ ຂອງອົງການກວດສອບແຫ່ງລັດ;

3. ພິຈາລະນາ, ຮັບຮອງເອົາ ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານປະຈຳປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າ ຂອງ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ;

4. ພິຈາລະນາ, ຮັບຮອງເອົາ ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດປະຈຳປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີຕໍ່ໜ້າ;

5. ຮັບຟັງການປະກອບຄຳເຫັນຂອງສູນກາງແນວລາວສ້າງຊາດ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ;

6. ພິຈາລະນາ, ຮັບຮອງເອົາ ກົດໝາຍ;

7. ຊັກຖາມ ຄະນະປະຈຳ, ປະທານກຳມາທິການ ແລະ ຫົວໜ້າຫ້ອງວ່າການ ສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ

8. ຮັບຟັງການລາຍງານບັນຫາໃດໜຶ່ງທີ່ພົ້ນເດັ່ນ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

9. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ວຽກງານອື່ນທີ່ສຳຄັນ.

ສຳລັບກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດແຕ່ລະຊຸດ ເປັນກອງປະຊຸມກາງສະໄໝ. ນອກຈາກເນື້ອໃນກອງປະຊຸມປະຈຳປີແລ້ວ ຍັງມີເນື້ອໃນ ດັ່ງນີ້:

1. ບົດລາຍງານການເຄື່ອນໄຫວວຽກງານກາງສະໄໝ ແລະ ທິດທາງແຜນການທ້າຍສະໄໝ;

2. ການປະເມີນການຈັດຕັ້ງປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາແຫ່ງຊາດ ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ;

3. ເນື້ອໃນອື່ນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 56 (ປັບປຸງ) ກອງປະຊຸມສະໄໝສາມັນ ປະຈຳທ້າຍເດືອນຕົ້ນປີ ຂອງສະພາແຫ່ງຊາດ**

ກອງປະຊຸມສະໄໝສາມັນ ປະຈຳທ້າຍເດືອນຕົ້ນປີ ຂອງສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ທ້າຍເດືອນຕົ້ນປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ທ້າຍເດືອນທ້າຍປີ; ການດັດແກ້ແຜນງົບປະມານແຫ່ງລັດປະຈຳປີ ໃນກໍລະນີລັດຖະບານສະເໜີມາ;

2. ພິຈາລະນາ, ຮັບຮອງເອົາ ກົດໝາຍ;

3. ພິຈາລະນາ, ຮັບຮອງເອົາ ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ໃນລະຫວ່າງສອງກອງປະຊຸມຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າຂອງສະພາແຫ່ງຊາດ;

4. ຮັບຟັງການລາຍງານຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃດໜຶ່ງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

5. ຮັບຟັງການລາຍງານບັນຫາໃດໜຶ່ງທີ່ພົ້ນເດັ່ນ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

6. ຊັກຖາມ ຄະນະປະຈຳ, ປະທານກຳມາທິການ ແລະ ຫົວໜ້າຫ້ອງວ່າການ ສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ;

7. ພິຈາລະນາ, ຮັບຮອງເອົາ ບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ວຽກງານອື່ນທີ່ສຳຄັນ.

**ມາດຕາ 57 (ປັບປຸງ) ກອງປະຊຸມທ້າຍສະໄໝ**

ກອງປະຊຸມທ້າຍສະໄໝ ແມ່ນ ກອງປະຊຸມສະໄໝສາມັນ ເປີດຂຶ້ນເປັນເທື່ອສຸດທ້າຍຂອງສະພາແຫ່ງຊາດແຕ່ລະຊຸດ ມີ ສິດ ແລະ ໜ້າທີ່ ພິຈາລະນາ, ຮັບຮອງເອົາ ວຽກງານປະຈຳປີ ແລະ ວຽກງານຫ້າປີ ດັ່ງນີ້:

1. ວຽກງານປະຈຳປີ ໃຫ້ປະຕິບັດຕາມມາດຕາ 55 ຂອງກົດໝາຍສະບັບນີ້;
2. ວຽກງານ ຫ້າປີ
   - 2.1. ບົດລາຍງານການເຄື່ອນໄຫວວຽກງານ ຫ້າປີ ຂອງສະພາແຫ່ງຊາດ;
   - 2.2. ການມອບໃບຢັ້ງຢືນການສຳເລັດໜ້າທີ່ ຂອງສະມາຊິກສະພາແຫ່ງຊາດ.
3. ເນື້ອໃນອື່ນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 58 ກອງປະຊຸມສະໄໝວິສາມັນ ຂອງສະພາແຫ່ງຊາດ**

ກອງປະຊຸມສະໄໝວິສາມັນ ຂອງສະພາແຫ່ງຊາດ ແມ່ນ ກອງປະຊຸມສະພາແຫ່ງຊາດ ທີ່ເປີດຂຶ້ນໃນລະຫວ່າງສອງກອງປະຊຸມສະໄໝສາມັນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ຫຼື ຕາມການສະເໜີຂອງປະທານປະເທດ, ນາຍົກລັດຖະມົນຕີ ຫຼື ສະມາຊິກສະພາແຫ່ງຊາດ ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກທັງໝົດ ເພື່ອພິຈາລະນາ, ຕົກລົງບັນຫາທີ່ ຈຳເປັນ ແລະ ຮີບດ່ວນ.

**ມາດຕາ 59 (ປັບປຸງ) ຫຼັກການດຳເນີນກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ຈະດຳເນີນໄດ້ກໍຕໍ່ເມື່ອ ມີສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດ.

ກອງປະຊຸມສະພາແຫ່ງຊາດ ດຳເນີນຢ່າງເປີດເຜີຍ ພາຍໃຕ້ການຄວບຄຸມ ແລະ ຊີ້ນຳຂອງ ປະທານ ຫຼື ຮອງປະທານຜູ້ໄດ້ຮັບມອບໝາຍ ຈາກປະທານສະພາແຫ່ງຊາດ.

ໃນກໍລະນີຈຳເປັນ ສະພາແຫ່ງຊາດ ອາດຈະດຳເນີນກອງປະຊຸມສະເພາະພາຍໃນຂອງຕົນກໍໄດ້ ຕາມການສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ ຫຼື ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດ.

ກອງປະຊຸມສະພາແຫ່ງຊາດ ແຕ່ງຕັ້ງກອງເລຂານຸການ ເປັນຜູ້ຊ່ວຍວຽກ.

**ມາດຕາ 60 (ປັບປຸງ) ການຮຽກໂຮມກອງປະຊຸມສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຮຽກໂຮມກອງປະຊຸມສະພາແຫ່ງຊາດ.

ເອກະສານ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ ຕ້ອງສົ່ງໃຫ້ສະມາຊິກສະພາແຫ່ງຊາດຢ່າງຊ້າ ຫ້າວັນ ກ່ອນວັນເປີດກອງປະຊຸມ.

**ມາດຕາ 61 (ປັບປຸງ) ຜູ້ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ**

ຜູ້ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ ມີ ສະມາຊິກສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ, ຜູ້ຕາງໜ້າອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ນອກຈາກນີ້ອາດຈະເຊີນ ອະດີດການນຳຂັ້ນສູງ, ອະດີດສະມາຊິກສະພາແຫ່ງຊາດ, ຜູ້ຕາງໜ້າອົງການຈັດຕັ້ງສັງຄົມ, ຕົວແທນຊົນເຜົ່າຕ່າງໆ, ທູຕານຸທູດ ແລະ ຕົວແທນອົງການຈັດຕັ້ງສາກົນ ຢູ່ ສປປ ລາວ ເຂົ້າຮ່ວມ.

ສຳລັບຜູ້ເຂົ້າຮ່ວມ ທີ່ບໍ່ແມ່ນສະມາຊິກສະພາແຫ່ງຊາດນັ້ນ ອາດຈະໄດ້ຮັບອະນຸຍາດຈາກປະທານກອງປະຊຸມ ໃຫ້ປະກອບຄວາມຄິດຄວາມເຫັນໃນກອງປະຊຸມ ແຕ່ຫາກບໍ່ມີສິດລົງຄະແນນສຽງ.

ສະມາຊິກລັດຖະບານ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ ຕ້ອງເຂົ້າຮ່ວມຕະຫຼອດວາລະກອງປະຊຸມ. ໃນກໍລະນີຈຳເປັນ ຫາກບໍ່ສາມາດເຂົ້າຮ່ວມໄດ້ ໃຫ້ມອບສິດເປັນລາຍລັກອັກສອນ ໃຫ້ຜູ້ຮອງຂອງຕົນເປັນຜູ້ເຂົ້າຮ່ວມແທນ ໂດຍແຈ້ງໃຫ້ສະພາແຫ່ງຊາດ ຮູ້ລ່ວງໜ້າ.

ສະມາຊິກສະພາແຫ່ງຊາດ ແລະ ຜູ້ເຂົ້າຮ່ວມອື່ນ ຕ້ອງປະຕິບັດຕາມລະບຽບການ ແລະ ວາລະຂອງກອງປະຊຸມທີ່ໄດ້ວາງອອກຢ່າງເຂັ້ມງວດ.

**ມາດຕາ 62 ມະຕິກອງປະຊຸມສະພາແຫ່ງຊາດ**

ມະຕິກອງປະຊຸມສະພາແຫ່ງຊາດ ເປັນນິຕິກຳປະເພດໜຶ່ງ ທີ່ມີຜົນບັງຄັບໃຊ້ທົ່ວສັງຄົມ ຊຶ່ງສັງລວມບັນຫາສຳຄັນຕ່າງໆ ທີ່ກອງປະຊຸມໄດ້ຕົກລົງຮັບຮອງເອົາ.

ມະຕິກອງປະຊຸມສະພາແຫ່ງຊາດ ຖືກຮັບຮອງເອົາດ້ວຍການລົງຄະແນນສຽງຢ່າງເປີດເຜີຍ ຫຼື ປິດລັບ ຕາມການຕົກລົງຂອງກອງປະຊຸມ.

ມະຕິກອງປະຊຸມສະພາແຫ່ງຊາດ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອ ໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດທີ່ເຂົ້າຮ່ວມກອງປະຊຸມ, ເວັ້ນເສຍແຕ່ກໍລະນີການເລືອກຕັ້ງ ປະທານປະເທດ, ຮອງປະທານປະເທດ, ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ກ່ອນໝົດອາຍຸການຂອງສະພາແຫ່ງຊາດ ແລະ ການປັບປຸງລັດຖະທຳມະນູນ ຊຶ່ງຕ້ອງໄດ້ຮັບຄະແນນສຽງຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 63 ບົດບັນທຶກກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດແຕ່ລະເທື່ອ ຕ້ອງເຮັດບົດບັນທຶກ ໂດຍມີລາຍເຊັນຢັ້ງຢືນຂອງຫົວໜ້າກອງເລຂານຸການ ແລະ ປະທານກອງປະຊຸມສະພາແຫ່ງຊາດ.

## ໝວດທີ 2
## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ

**ມາດຕາ 64 (ປັບປຸງ) ກອງປະຊຸມຄະນະປະຈຳສະພາແຫ່ງຊາດ**

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ມີ ສາມປະເພດ ດັ່ງນີ້:

1. ກອງປະຊຸມສະໄໝສາມັນ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນ ປະທານຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຮຽກໂຮມ ແລະ ນຳພາກອງປະຊຸມ;

2. ກອງປະຊຸມສະໄໝວິສາມັນ ເປີດຂຶ້ນ ຕາມການຕົກລົງຂອງ ປະທານ ຫຼື ຮອງປະທານ ຄະນະປະຈຳສະພາແຫ່ງຊາດ ຕາມການມອບໝາຍຂອງປະທານຄະນະປະຈຳສະພາແຫ່ງຊາດ ຫຼື ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຈຳນວນກຳມະການຄະນະປະຈຳສະພາແຫ່ງຊາດທັງໝົດ;

3. ກອງປະຊຸມຮ່ວມກັບ ລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປີດຂຶ້ນຢ່າງໜ້ອຍ ປີລະຄັ້ງ.

ຜູ້ເຂົ້າຮ່ວມກອງປະຊຸມຄະນະປະຈຳສະພາແຫ່ງຊາດ ມີ ຄະນະປະຈຳສະພາແຫ່ງຊາດ, ສະມາຊິກລັດຖະບານ, ການນຳຂອງອົງການຈັດຕັ້ງ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ການນຳຂອງອົງການຈັດຕັ້ງ ຫຼື ບຸກຄົນດັ່ງກ່າວ ມີສິດອອກຄຳເຫັນ ແຕ່ບໍ່ມີສິດລົງຄະແນນສຽງ.

ໃນກໍລະນີປະທານຄະນະປະຈຳສະພາແຫ່ງຊາດ ຕິດຂັດ ແມ່ນ ຮອງປະທານຜູ້ຖືກມອບໝາຍ ຈາກປະທານນັ້ນ ເປັນຜູ້ຮຽກໂຮມ ແລະ ນຳພາກອງປະຊຸມ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີກຳມະການ ຢ່າງໜ້ອຍ ສອງສ່ວນສາມເຂົ້າຮ່ວມ.

**ມາດຕາ 65 (ປັບປຸງ) ເນື້ອໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ**

ກອງປະຊຸມສະໄໝສາມັນ ຂອງຄະນະປະຈຳສະພາແຫ່ງຊາດ ພິຈາລະນາບັນຫາສຳຄັນ, ມີຈຸດສຸມທີ່ຕິດພັນກັບ ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ໃນເວລາສະພາແຫ່ງຊາດ ບໍ່ເປີດກອງປະຊຸມ.

ສຳລັບເນື້ອໃນ ກອງປະຊຸມສະໄໝວິສາມັນ ແລະ ກອງປະຊຸມຮ່ວມ ແມ່ນ ພິຈາລະນາບັນຫາຈຳເປັນ ແລະ ຮີບດ່ວນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

ບັນດາເນື້ອໃນທີ່ນຳເຂົ້າກອງປະຊຸມ ຕ້ອງແຈ້ງ ແລະ ສົ່ງໃຫ້ກຳມະການຄະນະປະຈຳສະພາແຫ່ງຊາດ ລວມທັງແຂກຖືກເຊີນ ຮູ້ລ່ວງໜ້າຢ່າງຊ້າ ສາມວັນ ກ່ອນວັນເປີດກອງປະຊຸມ.

**ມາດຕາ 66 (ປັບປຸງ) ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ**

ບັນຫາສຳຄັນຕ່າງໆ ທີ່ນຳມາພິຈາລະນາ ຢູ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຕ້ອງອອກມະຕິຮັບຮອງເອົາ.

ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນກຳມະການ ທີ່ເຂົ້າຮ່ວມກອງປະຊຸມ.

ຜົນກອງປະຊຸມ ຕ້ອງແຈ້ງໃຫ້ສະມາຊິກສະພາແຫ່ງຊາດ ແລະ ໃຫ້ສັງຄົມຮັບຮູ້ ໂດຍຜ່ານພາຫະນະສື່ມວນຊົນ ຕາມແຕ່ລະກໍລະນີ.

**ມາດຕາ 67 (ປັບປຸງ) ບົດບັນທຶກກອງປະຊຸມຄະນະປະຈຳສະພາແຫ່ງຊາດ**

ກອງປະຊຸມຄະນະປະຈຳສະພາແຫ່ງຊາດແຕ່ລະເທື່ອ ຕ້ອງມີບົດບັນທຶກ ໂດຍມີລາຍເຊັນຂອງຜູ້ບັນທຶກ ແລະ ລາຍເຊັນຢັ້ງຢືນຂອງປະທານກອງປະຊຸມ ພາຍໃນເວລາບໍ່ເກີນ ຫ້າວັນ ລັດຖະການ.

## ໝວດທີ 3
## ກອງປະຊຸມກຳມາທິການ ສະພາແຫ່ງຊາດ

**ມາດຕາ 68 ກອງປະຊຸມກຳມາທິການ ສະພາແຫ່ງຊາດ**

ກອງປະຊຸມກຳມາທິການ ສະພາແຫ່ງຊາດ ມີ ສອງປະເພດ ດັ່ງນີ້:

1. ກອງປະຊຸມຄະນະກຳມາທິການ;
2. ກອງປະຊຸມຄົບຄະນະຂອງກຳມາທິການ.

**ມາດຕາ 69 (ປັບປຸງ) ກອງປະຊຸມຄະນະກຳມາທິການ**

ກອງປະຊຸມຄະນະກຳມາທິການ ແມ່ນ ກອງປະຊຸມປຶກສາຫາລືວຽກງານເປັນປົກກະຕິ ທີ່ເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນປະທານກຳມາທິການ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ ຊຶ່ງມີຮອງປະທານ, ກຳມະການປະຈຳກຳມາທິການ, ກົມທີ່ເປັນເສນາທິການ ແລະ ອົງການກ່ຽວຂ້ອງ ເຂົ້າຮ່ວມ.

ກອງປະຊຸມຄະນະກຳມາທິການ ມີເນື້ອໃນ ດັ່ງນີ້:

1. ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນຜ່ານມາ ແລະ ແຜນການເຄື່ອນໄຫວວຽກງານປະຈຳເດືອນຕໍ່ໜ້າ ຂອງກຳມາທິການ;

2. ຄົ້ນຄວ້າ ສ້າງຮ່າງນິຕິກຳທີ່ພົວພັນກັບວຽກງານຂອງກຳມາທິການຕົນ ແລະ ປະກອບຄຳເຫັນໃສ່ຮ່າງນິຕິກຳຕ່າງໆ ຂອງກຳມາທິການອື່ນ ຫຼື ຂອງຄະນະປະຈຳສະພາແຫ່ງຊາດ;

3. ປຶກສາຫາລື ການປະຕິບັດວຽກງານຕົວຈິງ ເປັນຕົ້ນ ເນື້ອໃນ, ວິທີການ ແລະ ຮູບການຕິດຕາມກວດກາ ໃນຂົງເຂດທີ່ກຳມາທິການຮັບຜິດຊອບ;

4. ຄົ້ນຄວ້າ, ວິໄຈ ສະພາບການ, ບັນຫາພົ້ນເດັ່ນທີ່ພົວພັນກັບກຳມາທິການຕົນ ແລະ ສະເໜີມາດຕະການແກ້ໄຂ ເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ແລະ ໃຫ້ທິດຊີ້ນຳ;

5. ຮັບຟັງການລາຍງານຂອງ ຂະແໜງການ ແລະ ອົງການທີ່ກ່ຽວຂ້ອງ ກ່ຽວກັບບັນຫາທີ່ສົນໃຈ ແລະ ປະກອບຄຳເຫັນ, ໃຫ້ຄຳແນະນຳ ກ່ຽວກັບການແກ້ໄຂບັນຫາທີ່ຍັງຄ້າງຄາ;

6. ກະກຽມ ກອງປະຊຸມຄົບຄະນະກຳມາທິການ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ ແລະ ວຽກງານອື່ນ ທີ່ຈຳເປັນ;

7. ຄົ້ນຄວ້າ, ພິຈາລະນາ ການບຳລຸງສ້າງ, ການຝຶກອົບຮົມ, ການແຕ່ງຕັ້ງ, ການຍົກຍ້າຍ, ການປົດຕຳແໜ່ງພະນັກງານ ຂອງກົມທີ່ເປັນເສນາທິການ ຕາມການສະເໜີຂອງຫ້ອງວ່າການສະພາແຫ່ງຊາດ;

8. ມີເນື້ອໃນອື່ນ ຖ້າເຫັນວ່າມີຄວາມຈຳເປັນ.

### ມາດຕາ 70 (ປັບປຸງ) ກອງປະຊຸມຄົບຄະນະກຳມາທິການ

ກອງປະຊຸມຄົບຄະນະກຳມາທິການ ແມ່ນ ກອງປະຊຸມປຶກສາຫາລືວຽກງານປະຈຳປີ ທີ່ເປີດຂຶ້ນຢ່າງໜ້ອຍປີລະເທື່ອ ໂດຍການຮຽກໂຮມ ແລະ ການເປັນປະທານຂອງປະທານກຳມາທິການທີ່ກ່ຽວຂ້ອງ ຕາມການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ ຊຶ່ງມີກຳມະການສັງກັດກຳມາທິການ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມຂອງຈຳນວນກຳມະການທັງໝົດ.

ກອງປະຊຸມຄົບຄະນະກຳມາທິການ ໃຫ້ເປີດຂຶ້ນກ່ອນກອງປະຊຸມສະໄໝສາມັນ ປະຈຳປີ ຂອງສະພາແຫ່ງຊາດ ຫຼື ຈະເປີດ ຮ່ວມກັບກຳມາທິການອື່ນ ກໍໄດ້.

ກອງປະຊຸມຄົບຄະນະກຳມາທິການ ພິຈາລະນາບັນຫາຕ່າງໆ ເປັນຕົ້ນ ບົດລາຍງານການເຄື່ອນໄຫວວຽກງານໃນປີຜ່ານມາ ແລະ ທິດທາງແຜນການວຽກງານໃນປີຕໍ່ໜ້າ ຂອງກຳມາທິການ, ບົດລາຍງານຜົນການຕິດຕາມກວດກາ, ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງກົດໝາຍ, ຮ່າງນິຕິກຳ ແລະ ວຽກງານອື່ນ ໃນຂົງເຂດທີ່ຕົນຮັບຜິດຊອບ.

### ມາດຕາ 71 (ປັບປຸງ) ມະຕິກອງປະຊຸມຄົບຄະນະກຳມາທິການ

ບັນຫາສຳຄັນຕ່າງໆທີ່ນຳມາພິຈາລະນາ ໃນກອງປະຊຸມຄົບຄະນະກຳມາທິການ ຕ້ອງອອກມະຕິຮັບຮອງເອົາ.

ມະຕິກອງປະຊຸມຄົບຄະນະກຳມາທິການ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນກຳມະການ ທີ່ເຂົ້າຮ່ວມກອງປະຊຸມ.

ຜົນກອງປະຊຸມ ຕ້ອງລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ແລະ ແຈ້ງໃຫ້ສະມາຊິກສະພາແຫ່ງຊາດ ແລະ ໃຫ້ສັງຄົມຮັບຮູ້ ໂດຍຜ່ານພາຫະນະສື່ມວນຊົນ ຕາມແຕ່ລະກໍລະນີ.

ມາດຕາ 72 (ປັບປຸງ) ບົດບັນທຶກກອງປະຊຸມຄົບຄະນະກຳມາທິການສະພາແຫ່ງຊາດ

ກອງປະຊຸມຄົບຄະນະກຳມາທິການ ຕ້ອງເຮັດບົດບັນທຶກ ໂດຍມີລາຍເຊັນຂອງຜູ້ບັນທຶກ ແລະ ລາຍເຊັນຢັ້ງຢືນຂອງປະທານກອງປະຊຸມ ພາຍໃນເວລາບໍ່ເກີນ ຫ້າວັນລັດຖະການ, ພ້ອມທັງລາຍງານຜົນກອງປະຊຸມໃຫ້ຄະນະປະຈຳສະພາແຫ່ງຊາດ ພາຍໃນເວລາ ສິບວັນລັດຖະການ.

## ໝວດທີ 4
## ກອງປະຊຸມຫ້ອງວ່າການສະພາແຫ່ງຊາດ

ມາດຕາ 73 (ປັບປຸງ) ກອງປະຊຸມຫ້ອງວ່າການສະພາແຫ່ງຊາດ

ກອງປະຊຸມຫ້ອງວ່າການສະພາແຫ່ງຊາດ ມີ ສອງປະເພດ ດັ່ງນີ້:

1. ກອງປະຊຸມປະຈຳເດືອນຫ້ອງວ່າການ;
2. ກອງປະຊຸມປະຈຳປີຫ້ອງວ່າການ.

ມາດຕາ 74 (ປັບປຸງ) ກອງປະຊຸມປະຈຳເດືອນຫ້ອງວ່າການ

ກອງປະຊຸມປະຈຳເດືອນຫ້ອງວ່າການ ແມ່ນ ກອງປະຊຸມປຶກສາຫາລືວຽກງານເປັນປົກກະຕິ ທີ່ເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນຫົວໜ້າຫ້ອງວ່າການ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ ຊຶ່ງມີຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ ທີ່ຂຶ້ນໂດຍກົງກັບຫ້ອງວ່າການເຂົ້າຮ່ວມ. ກໍລະນີຈຳເປັນອາດຈະເຊີນ ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ ທີ່ຂຶ້ນໂດຍກົງກັບກຳມາທິການ ແລະ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ເຂົ້າຮ່ວມ.

ກອງປະຊຸມປະຈຳເດືອນຫ້ອງວ່າການ ມີເນື້ອໃນ ດັ່ງນີ້:

1. ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳເດືອນຜ່ານມາ ແລະ ແຜນການວຽກງານ ປະຈຳເດືອນຕໍ່ໜ້າຂອງຫ້ອງວ່າການ;
2. ຄົ້ນຄວ້າ ສ້າງຮ່າງນິຕິກຳທີ່ພົວພັນກັບວຽກງານຂອງຫ້ອງວ່າການ;
3. ຮັບການສ່ອງແສງຂອງ ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ ພາຍໃນສະພາແຫ່ງຊາດ;
4. ປຶກສາຫາລື ການປະຕິບັດວຽກງານຄົ້ນຄວ້າ-ສັງລວມເນື້ອໃນ ແລະ ຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນ;
5. ກະກຽມ ກອງປະຊຸມວຽກງານຫ້ອງວ່າການ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ ແລະ ວຽກງານອື່ນ ທີ່ຈຳເປັນ;
6. ຄົ້ນຄວ້າ, ພິຈາລະນາ ການບຳລຸງສ້າງ, ການຝຶກອົບຮົມ, ການແຕ່ງຕັ້ງ, ການຍົກຍ້າຍ, ການປົດຕຳແໜ່ງພະນັກງານຂອງ ກົມ, ຫົວໜ້າອົງການລັດທຽບເທົ່າກົມ ພາຍໃນສະພາແຫ່ງຊາດ ຕາມການສະເໜີຂອງກົມຈັດຕັ້ງ-ພະນັກງານ ຂອງຫ້ອງວ່າການສະພາແຫ່ງຊາດ;
7. ເນື້ອໃນອື່ນ ຖ້າເຫັນວ່າມີຄວາມຈຳເປັນ.

ມາດຕາ 75 (ປັບປຸງ) ກອງປະຊຸມປະຈຳປີຫ້ອງວ່າການ

ກອງປະຊຸມປະຈຳປີຫ້ອງວ່າການ ແມ່ນ ກອງປະຊຸມປຶກສາຫາລືວຽກງານປະຈຳປີ ໂດຍການຮຽກໂຮມ ແລະ ການເປັນປະທານ ຂອງຫົວໜ້າຫ້ອງວ່າການ ຕາມການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ ຊຶ່ງມີ ຮອງຫົວໜ້າຫ້ອງວ່າການ, ຮອງເລຂາທິການ ສະພາແຫ່ງຊາດ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ ພາຍໃນສະພາແຫ່ງຊາດ ແລະ ພະນັກງານວິຊາການ ທັງໝົດຂອງຫ້ອງວ່າການສະພາແຫ່ງຊາດ ເຂົ້າຮ່ວມ.

ກອງປະຊຸມປະຈຳປີຫ້ອງວ່າການ ພິຈາລະນາບັນຫາຕ່າງໆ ເປັນຕົ້ນ ບົດລາຍງານການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ແລະ ແຜນການວຽກງານໃນຕໍ່ໜ້າ ຂອງຫ້ອງວ່າການ ແລະ ວຽກງານອື່ນ ໃນຂົງເຂດທີ່ຕົນຮັບຜິດຊອບ.

**ມາດຕາ 76 (ປັບປຸງ) ບົດບັນທຶກກອງປະຊຸມຂອງຫ້ອງວ່າການສະພາແຫ່ງຊາດ**

ກອງປະຊຸມຂອງຫ້ອງວ່າການສະພາແຫ່ງຊາດ ຕ້ອງເຮັດບົດບັນທຶກ ໂດຍມີລາຍເຊັນຂອງຜູ້ບັນທຶກ ແລະ ລາຍເຊັນຢັ້ງຢືນຂອງປະທານກອງປະຊຸມ.

ຜົນກອງປະຊຸມວຽກງານຂອງຫ້ອງວ່າການສະພາແຫ່ງຊາດ ຕ້ອງລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ, ແຈ້ງໃຫ້ກຳມາທິການ, ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ໃຫ້ສັງຄົມຮັບຮູ້ ໂດຍຜ່ານພາຫະນະສື່ມວນຊົນ ຕາມແຕ່ລະກໍລະນີ.

## ພາກທີ V
## ລະບອບວິທີເຮັດວຽກ
### ໝວດທີ 1
### ລະບອບວິທີເຮັດວຽກ

**ມາດຕາ 77 (ປັບປຸງ) ລະບອບເຮັດວຽກ**

ສະພາແຫ່ງຊາດ, ຄະນະປະຈຳ, ກຳມາທິການ, ຫ້ອງວ່າການ, ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ, ເອົາກອງປະຊຸມເປັນບ່ອນ ປຶກສາຫາລື ແລະ ຕົກລົງບັນຫາຕາມສຽງສ່ວນຫຼາຍ ບົນພື້ນຖານ ລັດຖະທຳມະນູນ ແລະ ກົດໝາຍ.

**ມາດຕາ 78 (ປັບປຸງ) ວິທີເຮັດວຽກ**

ວິທີເຮັດວຽກຂອງ ສະພາແຫ່ງຊາດ, ຄະນະປະຈຳ, ກຳມາທິການ, ຫ້ອງວ່າການ, ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ດຳເນີນດ້ວຍລະບອບປະຊຸມ, ມີການແບ່ງງານ ແລະ ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ, ມີແຜນການ, ການກວດກາ, ສະຫຼຸບ, ຖອດຖອນບົດຮຽນ ແລະ ປະຕິບັດລະບອບລາຍງານ, ຂໍຄຳເຫັນຊີ້ນຳຈາກຂັ້ນເທິງຂອງຕົນ, ປະສານສົມທົບກັບການຈັດຕັ້ງຕ່າງໆ ພາຍໃນສະພາແຫ່ງຊາດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ, ພົວພັນ, ຮ່ວມມືກັບການຈັດຕັ້ງ ລັດຖະສະພາ ຕ່າງປະເທດ, ພາກພື້ນ ແລະ ສາກົນ.

### ໝວດທີ 2
### ການພົວພັນພາຍໃນສະພາແຫ່ງຊາດ

**ມາດຕາ 79 ການພົວພັນລະຫວ່າງ ຄະນະປະຈຳ ກັບ ບັນດາກຳມາທິການສະພາແຫ່ງຊາດ**

ຄະນະປະຈຳ ພົວພັນກັບ ບັນດາກຳມາທິການສະພາແຫ່ງຊາດ ດ້ວຍການ ຊີ້ນຳ ແລະ ການລາຍງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນ ການສ້າງ, ປັບປຸງ ກົດໝາຍ, ການຕິດຕາມກວດກາ, ການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ທີ່ຕິດພັນກັບແຕ່ລະກຳມາທິການ.

**ມາດຕາ 80 (ປັບປຸງ) ການພົວພັນລະຫວ່າງ ຄະນະປະຈຳ ກັບ ຫ້ອງວ່າການສະພາແຫ່ງຊາດ**

ຄະນະປະຈຳ ພົວພັນ ກັບ ຫ້ອງວ່າການສະພາແຫ່ງຊາດ ດ້ວຍການຊີ້ນຳ ແລະ ການລາຍງານ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນ ວຽກງານຄົ້ນຄວ້າ-ສັງລວມເນື້ອໃນຮອບດ້ານ ແລະ ວຽກງານຄຸ້ມຄອງ, ບໍລິຫານ, ແຜນການ ແລະ ການເງິນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການດຳເນີນກອງປະຊຸມ ແລະ ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ.

**ມາດຕາ 81 (ປັບປຸງ) ການພົວພັນລະຫວ່າງບັນດາກຳມາທິການສະພາແຫ່ງຊາດດ້ວຍກັນ**

ການພົວພັນ ລະຫວ່າງ ບັນດາກຳມາທິການສະພາແຫ່ງຊາດດ້ວຍກັນ ດຳເນີນດ້ວຍການປຶກສາຫາລື, ປະສານສົມທົບ ແລະ ການແລກປ່ຽນ ຂໍ້ມູນ ຂ່າວສານ, ການຖອດຖອນບົດຮຽນ ຊຶ່ງກັນ ແລະ ກັນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນ ການສ້າງ, ປັບປຸງ ກົດໝາຍ, ການຕິດຕາມກວດກາ, ການພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ, ການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ທີ່ຕິດພັນກັບແຕ່ລະກຳມາທິການ.

**ມາດຕາ 82 (ປັບປຸງ) ການພົວພັນ ລະຫວ່າງ ບັນດາກຳມາທິການ ກັບຫ້ອງວ່າການສະພາແຫ່ງຊາດ ແລະ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ**

ບັນດາກຳມາທິການພົວພັນ ກັບ ຫ້ອງວ່າການສະພາແຫ່ງຊາດ ແລະ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ດ້ວຍການປຶກສາຫາລື, ປະສານສົມທົບ, ການສະໜອງເນື້ອໃນ, ຂໍ້ມູນ ຂ່າວສານ, ການກະກຽມ ແລະ ດຳເນີນກອງປະຊຸມສະພາແຫ່ງຊາດ ເປັນຕົ້ນ ການຮ່າງບົດລາຍງານ ຂອງສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດ, ການສ້າງຮ່າງມະຕິກອງປະຊຸມສະພາແຫ່ງຊາດ; ການຄຸ້ມຄອງບໍລິຫານ, ແຜນການ ແລະ ການເງິນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງບັນດາກຳມາທິການ.

## ໝວດທີ 3
## ການພົວພັນ ລະຫວ່າງ ສະພາແຫ່ງຊາດ ກັບ ອົງການອື່ນຂອງລັດ

**ມາດຕາ 83 (ປັບປຸງ) ການພົວພັນລະຫວ່າງສະພາແຫ່ງຊາດ ກັບສະພາປະຊາຊົນຂັ້ນແຂວງ**

ສະພາແຫ່ງຊາດ ພົວພັນກັບ ສະພາປະຊາຊົນຂັ້ນແຂວງ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການສ້າງ, ປັບປຸງ ກົດໝາຍ ແລະ ນິຕິກຳ;
2. ການຕິດຕາມກວດກາ ການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດ ຢູ່ທ້ອງຖິ່ນ;
3. ການບຳລຸງ ຍົກລະດັບ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ລັດຖະກອນ ທີ່ເປັນເສນາທິການຂອງສະພາປະຊາຊົນຂັ້ນແຂວງ;
4. ການພິຈາລະນາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ.

**ມາດຕາ 84 (ປັບປຸງ) ການພົວພັນ ລະຫວ່າງ ສະພາແຫ່ງຊາດ ກັບປະທານປະເທດ**

ສະພາແຫ່ງຊາດ ພົວພັນກັບ ປະທານປະເທດ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການປະກາດໃຊ້ ລັດຖະທຳມະນູນ, ກົດໝາຍ ແລະ ອອກລັດຖະບັນຍັດ;
2. ການເລືອກຕັ້ງ, ປົດຕຳແໜ່ງ ນາຍົກລັດຖະມົນຕີ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ສູນກາງ, ປະທານອົງການກວດສອບແຫ່ງລັດ;

3. ການໃຫ້ນິລະໂທດກຳ;
4. ການເຂົ້າຮ່ວມ ແລະ ໃຫ້ການຊີ້ແຈງຕໍ່ກອງປະຊຸມສະພາແຫ່ງຊາດ;
5. ວຽກງານອື່ນ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 85 (ປັບປຸງ) ການພົວພັນ ລະຫວ່າງ ສະພາແຫ່ງຊາດ ກັບລັດຖະບານ**

ສະພາແຫ່ງຊາດ ພົວພັນກັບ ລັດຖະບານ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການສ້າງ ແລະ ປັບປຸງ ລັດຖະທຳມະນູນ, ກົດໝາຍ ແລະ ລັດຖະບັນຍັດ;
2. ການສະເໜີ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ;
3. ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ;
4. ວຽກງານອື່ນ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຫຼື ລັດຖະບານ.

**ມາດຕາ 86 (ປັບປຸງ) ການພົວພັນ ລະຫວ່າງ ສະພາແຫ່ງຊາດ ກັບ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ**

ສະພາແຫ່ງຊາດ ພົວພັນກັບ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການສ້າງ ແລະ ປັບປຸງກົດໝາຍ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງແຕ່ລະອົງການ;
3. ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ;
4. ວຽກງານອື່ນ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຫຼື ຂອງອົງການດັ່ງກ່າວ.

**ມາດຕາ 87 (ປັບປຸງ) ການພົວພັນລະຫວ່າງສະພາແຫ່ງຊາດ ກັບ ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ**

ສະພາແຫ່ງຊາດ ພົວພັນກັບ ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການສ້າງ ແລະ ປັບປຸງກົດໝາຍ;
2. ການກະກຽມ ໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ການຕິດຕາມກວດກາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ;
3. ວຽກງານອື່ນ ຕາມການສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ ຫຼື ອົງການດັ່ງກ່າວ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 88 (ປັບປຸງ) ຂໍ້ຫ້າມ ສຳລັບສະມາຊິກສະພາແຫ່ງຊາດ**

ຫ້າມ ສະມາຊິກສະພາແຫ່ງຊາດ ມີພຶດຕິກຳ ດັ່ງນີ້:

1. ຂາດການເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ ໂດຍບໍ່ມີເຫດຜົນ, ເມີນເສີຍຕໍ່ການປະຕິບັດໜ້າທີ່;
2. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກຂອງຕົນ;
3. ຈັດຕັ້ງເປັນກຸ່ມ ຫຼື ແບ່ງແຍກ ຄວາມສາມັກຄີປະຊາຊົນລາວບັນດາເຜົ່າ ແລະ ຄວາມສາມັກຄີພາຍໃນສະພາແຫ່ງຊາດ;

4. ກໍ່ຄວາມເສຍຫາຍ ຕໍ່ຜົນປະໂຫຍດຂອງ ການຈັດຕັ້ງ, ລວມໝູ່ ຫຼື ບຸກຄົນ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

**ມາດຕາ 89 (ປັບປຸງ) ຂໍ້ຫ້າມ ສຳລັບການຈັດຕັ້ງ ແລະ ບຸກຄົນອື່ນ**

ຫ້າມ ການຈັດຕັ້ງ ແລະ ບຸກຄົນອື່ນ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງຕໍ່ ສະມາຊິກ ຫຼື ພະນັກງານ-ລັດຖະກອນ ສະພາແຫ່ງຊາດ ທີ່ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ;

2. ຍົກຍ້າຍສະມາຊິກສະພາແຫ່ງຊາດຜູ້ປະຈຳການ ໂດຍບໍ່ມີການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;

3. ລະເມີດສິດ, ຜົນປະໂຫຍດ, ຍັກຍອກ, ສໍ້ໂກງ ຊັບສິນຂອງສະພາແຫ່ງຊາດ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

## ພາກທີ VII
## ວັນສ້າງຕັ້ງ, ງົບປະມານ, ເຄື່ອງໝາຍ, ກາໝາຍ ແລະ ຕາປະທັບ

**ມາດຕາ 90 ວັນສ້າງຕັ້ງສະພາແຫ່ງຊາດ**

ວັນສ້າງຕັ້ງສະພາແຫ່ງຊາດ ແມ່ນ ວັນທີ 2 ທັນວາ 1975.

**ມາດຕາ 91 (ປັບປຸງ) ງົບປະມານຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີງົບປະມານຮັບໃຊ້ການເຄື່ອນໄຫວວຽກງານຂອງຕົນ ໂດຍປະຕິບັດຕາມ ຫຼັກການລວມສູນງົບປະມານແຫ່ງລັດ, ມີການແບ່ງຄວາມຮັບຜິດຊອບ ແລະ ແບ່ງຂັ້ນຄຸ້ມຄອງແຕ່ລະຂັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

**ມາດຕາ 92 ເຄື່ອງໝາຍ ແລະ ກາໝາຍ ຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີ ເຄື່ອງໝາຍ ແລະ ກາໝາຍ ສະເພາະຂອງຕົນ ໂດຍແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງ.

**ມາດຕາ 93 (ປັບປຸງ) ຕາປະທັບຂອງປະທານສະພາແຫ່ງຊາດ**

ຕາປະທັບຂອງປະທານສະພາແຫ່ງຊາດ ເປັນຮູບວົງມົນ, ຢູ່ໃນກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ", ເບື້ອງລຸ່ມຂຽນວ່າ "ປະທານສະພາແຫ່ງຊາດ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 94 (ປັບປຸງ) ຕາປະທັບຂອງຄະນະປະຈຳສະພາແຫ່ງຊາດ**

ຕາປະທັບຂອງຄະນະປະຈຳສະພາແຫ່ງຊາດ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາແຫ່ງຊາດ", ເບື້ອງລຸ່ມຂຽນວ່າ "ຄະນະປະຈຳ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 95 (ປັບປຸງ) ຕາປະທັບຂອງກຳມາທິການສະພາແຫ່ງຊາດ**

ກຳມາທິການສະພາແຫ່ງຊາດ ມີ ຕາປະທັບສະເພາະຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາແຫ່ງຊາດ", ເບື້ອງລຸ່ມຂຽນວ່າ "ກຳມາທິການ..." ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 96 (ປັບປຸງ) ຕາປະທັບຂອງຫ້ອງວ່າການສະພາແຫ່ງຊາດ**

ຫ້ອງວ່າການສະພາແຫ່ງຊາດ ມີ ຕາປະທັບສະເພາະຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ກາງວົງມົນມີ ເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາແຫ່ງຊາດ" ເບື້ອງລຸ່ມຂຽນວ່າ "ຫ້ອງວ່າການ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 97 (ປັບປຸງ) ຕາປະທັບຂອງກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ**

ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ມີຕາປະທັບຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາແຫ່ງຊາດ", ເບື້ອງລຸ່ມຂຽນ "ຊື່ຂອງກົງຈັກ..." ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 98 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 99 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບສະພາແຫ່ງຊາດ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 100 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ອອກຄຳແນະນຳຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 101 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 01 ຕຸລາ 2024 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 64/ສພຊ, ລົງວັນທີ 9 ທັນວາ 2015, ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປີ 2015 ສະບັບເລກທີ 10/ສພຊ, ລົງວັນທີ 14 ພະຈິກ 2016 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ